| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 39.880 |
| ຈຳນວນພະນັກງານຖາວອນ (ຄົນ) | 65 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | ບໍ່ມີ |

| | |
|---|---|
| ພື້ນທີ່ໃຫ້ການບໍລິການ (ເມືອງ) | 5 |
| ຈຳນວນໜໍ້ແທກນໍ້າ (ໜ່ວຍ) | 8.808 |
| ປະເພດຄົວເຮືອນ (ໜ່ວຍ) | 7.889 |
| ປະເພດສຳນັກງານອົງການ (ໜ່ວຍ) | 260 |
| ປະເພດທຸລະກິດ-ການຄ້າ (ໜ່ວຍ) | 555 |
| ປະເພດອຸດສາຫະກຳ (ໜ່ວຍ) | 104 |

### (2) ພື້ນທີ່ບໍລິການນໍ້າປະປາ ຂອງ ລັດວິສາຫະກິດນໍ້າປະປາ ແຂວງຫົວພັນ




**ຮູບທີ 4.7** ແຜນທີ່ສະແດງ ພື້ນທີ່ບໍລິການນໍ້າປະປາ ຂອງ ລັດວິສາຫະກິດນໍ້າປະປາ ແຂວງຫົວພັນ

### (3) **ໂຮງງານຜະລິດນ້ຳ**

**ຕາຕະລາງ 4.13** ໂຮງງານຜະລິດນ້ຳປະປາ ຢູ່ ແຂວງຫົວພັນ

| ລ/ດ | ຊື່ເມືອງ/ພື້ນທີ່ບໍລິການ | ໂຮງງານຜະລິດນ້ຳ | ຄວາມສາມາດ (ມ³/ມື້) | ນ້ຳຜະລິດ (ມ³/ປີ) | ປີ ນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1. | ມ. ຊຳເໜືອ | ໂຮງງານ ມ. ຊຳເໜືອ | 2.000 | 1.172.039 | 1998 | ຫ້ວຍແໝນ, ຫ້ວຍຫີນດຳ | ADB |
| 2. | ມ. ວຽງໄຊ | ໂຮງງານ ຫຼັກ 29 | 1.500 | 230.286 | 2005 | ນ້ຳອອກບໍ່ໜອງສູງ, ຫ້ວຍເຮ້ຍ | ADB |
| 3. | ມ. ຊຳໃຕ້ | ໂຮງງານ ມ. ຊຳໃຕ້ | 1.270 | 212.380 | 2013 | ຫ້ວຍສະໜອງ | ADB |
| 4. | ມ. ແອດ-ຊຽງຄໍ້ | ໂຮງງານ ມ. ແອດ-ຊຽງຄໍ້ | 3.330 | 170.290 | 2016 | ນ້ຳມ້າ | ADB |
| 5. | ມ. ຫົວເມືອງ | ໂຮງງານ ມ. ຫົວເມືອງ | 250 | 20.075 | 2017 | ຫ້ວຍຈອງຫອຍ | ລັດຖະບານ |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 11.01.2013, ນຳໃຊ້ປີ 2013-2015 ແລະ ນຳໃຊ້ເຖິງ 2018

**ຕາຕະລາງ 4.14** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງຫົວພັນ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| I | ຄົວເຮືອນ | | | | |
| | 0-7 ມ³ | ກີບ/ມ³ | 3.150 | 3.339 | 3.640 |
| | 7.1-15 ມ³ | ກີບ/ມ³ | 3.816 | 4.045 | 4.449 |
| | ໃຊ້ນ້ຳຫຼາຍກວ່າ 15 ມ³ | ກີບ/ມ³ | 4.860 | 5.152 | 5.667 |
| II | ສຳນັກງານອົງການຂອງລັດ | ກີບ/ມ³ | 4.957 | 5.255 | 5.728 |
| III | ທຸລະກິດ-ການຄ້າ ແລະ ອຸດສະຫະກຳ | | | | |
| | 1-15 ມ³ | ກີບ/ມ³ | 4.957 | 5.255 | 5.728 |
| | 15.1-25 ມ³ | ກີບ/ມ³ | 5.056 | 5.465 | 6.071 |
| | ໃຊ້ນ້ຳຫຼາຍກວ່າ 25 ມ³ | ກີບ/ມ³ | 5.157 | 5.683 | 6.435 |
| IV | ທຸລະກິດ-ການຄ້າ ແລະ ອຸດສະຫະກຳ | | | | |
| | 1-25 ມ³ | ກີບ/ມ³ | 5.157 | 5.683 | 6.435 |
| | 25.1-50 ມ³ | ກີບ/ມ³ | 5.261 | 5.911 | 6.822 |
| | ໃຊ້ນ້ຳຫຼາຍກວ່າ 50 ມ³ | ກີບ/ມ³ | 5.366 | 6.147 | 7.231 |
| **ລາຄາສະເລ່ຍ** | | **ກີບ/ມ³** | **4.097** | **4.347** | **4.739** |

4.8 **ແຂວງໄຊຍະບູລີ**

## (1) ຂໍ້ມູນພື້ນຖານ

| | |
|---|---|
| ເນື້ອທີ່ທັງໝົດ (km$^2$) | 16.389 |
| ຈຳນວນປະຊາກອນ (ຄົນ) | 396.529 |
| ຈຳນວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | 112.574 |
| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 77.933 |
| ຈຳນວນພະນັກງານຖາວອນ (ຄົນ) | 84 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | 8 |

| | |
|---|---|
| ພື້ນທີ່ໃຫ້ການບໍລິການ (ເມືອງ) | 9 |
| ຈຳນວນໝໍ້ແທກນ້ຳ (ໜ່ວຍ) | 17.793 |
| ປະເພດຄົວເຮືອນ (ໜ່ວຍ) | 16.550 |
| ປະເພດສຳນັກງານອົງການ (ໜ່ວຍ) | 492 |
| ປະເພດທຸລະກິດ-ການຄ້າ (ໜ່ວຍ) | 581 |
| ປະເພດອຸດສາຫະກຳ (ໜ່ວຍ) | 170 |

## (2) ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງໄຊຍະບູລີ




**ຮູບທີ 4.8** ແຜນທີ່ສະແດງ ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງໄຊຍະບູລີ

(3) **ໂຮງງານຜະລິດນ້ຳ**

**ຕາຕະລາງ 4.15** ໂຮງງານຜະລິດນ້ຳປະປາ ຢູ່ ແຂວງໄຊຍະບູລີ

| ລ/ດ | ຊື່ເມືອງ/ພື້ນທີ່ບໍລິການ | ໂຮງງານຜະລິດນ້ຳ | ຄວາມສາມາດ ($ມ^3$/ມື້) | ນ້ຳຜະລິດ ($ມ^3$/ປີ) | ປີນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ມ. ໄຊຍະບູລີ | ໂຮງງານ ພູວຽງ | 4.800 | 1.787.500 | 1998 | ນ້ຳຮຸ່ງ | ADB |
| 2 | ມ. ປາກລາຍ | ໂຮງງານ ບ. ແສງລາຍ | 2.160 | 587.766 | 2005 | ນ້ຳຂອງ | ADB |
| 3 | ມ. ຫົງສາ | ໂຮງງານ ບ. ວຽງແກ້ວ | 2.160 | 712.585 | 2007 | ຫ້ວຍເຫຼືອກ | ADB |
| | | ໂຮງງານ ບ. ແກ່ນຄຳ | 480 | | 2013 | ຫ້ວຍແກ່ນ | ບ/ສ. Hongsa Power |
| | | ໂຮງງານ ບ. ຫານ | 240 | | 2013 | ຫ້ວຍແຫຼ້ | |
| | | ໂຮງງານ ບ. ນາປຸ່ງ | 240 | | 2013 | ຫ້ວຍກອດ | |
| 4 | ມ. ຊຽງຮ່ອນ | ໂຮງງານ ບ. ທາດ | 1.200 | 98.628 | 2011 | ຫ້ວຍປໍ | ລັດຖະບານ |
| 5 | ມ.ແກ່ນທ້າວ | ໂຮງງານ ບ.ຈອມແກ້ວ | 2.370 | 137.160 | 2010 | ນ້ຳເຫືອງ | |
| 6 | ມ. ທົ່ງມີໄຊ | ໂຮງງານ ບ. ດ່ານ | 1.200 | 598.934 | 2011 | ນ້ຳພູນ | |
| 7 | ມ. ເງິນ | ໂຮງງານ ບ.ນາສະຫວ່າງ | 1.200 | 221.141 | 2008 | ນ້ຳຢາງ | |
| 8 | ມ. ພຽງ | ໂຮງງານ ບ. ນ້ຳປຸຍ | 1.200 | 117.780 | 2008 | ນ້ຳປຸຍ | |
| 9 | ມ. ຄອບ | ໂຮງງານ ບ. ຫົວເມືອງ | 1.200 | 61.207 | 2017 | ຫ້ວຍຕາດ | NEDA |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 29.07.2015, ນຳໃຊ້ປີ 2015-2017 ແລະ ນຳໃຊ້ເຖິງປັດຈຸບັນ

**ຕາຕະລາງ 4.16** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງໄຊຍະບູລີ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2015 | 2016 | 2017 |
|---|---|---|---|---|---|
| I | ຄົວເຮືອນ | | | | |
| | 0-5 $ມ^3$ | ກີບ/$ມ^3$ | 2.300 | 2.500 | 3.000 |
| | 6-15 $ມ^3$ | | 3.100 | 3.500 | 3.800 |
| | 16-30 $ມ^3$ | | 3.400 | 3.800 | 4.200 |
| | > 30 $ມ^3$ | | 3.600 | 4.000 | 4.000 |
| II | ສຳນັກງານ ອົງການຂອງລັດ | ກີບ/$ມ^3$ | 4.000 | 4.300 | 4.600 |
| III | ທຸລະກິດ-ການຄ້າ | | 4.600 | 4.900 | 5.200 |
| III | ອຸດສະຫະກຳ ແລະ ບໍລິການ | ກີບ/$ມ^3$ | 5.000 | 5.300 | 5.600 |
| **ລາຄາສະເລ່ຍ** | | **ກີບ/$ມ^3$** | **3.300** | **3.700** | **4.000** |

## 4.9 ແຂວງຊຽງຂວາງ

### (1) ຂໍ້ມູນພື້ນຖານ

| | |
|---|---|
| ເນື້ອທີ່ທັງໝົດ (km$^2$) | 15.835 |
| ຈຳນວນປະຊາກອນ (ຄົນ) | 256.969 |
| ຈຳນວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | 62.217 |
| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 40.874 |
| ຈຳນວນພະນັກງານຖາວອນ (ຄົນ) | 44 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | 7 |

| | |
|---|---|
| ພື້ນທີ່ໃຫ້ການບໍລິການ (ເມືອງ) | 5 |
| ຈຳນວນໝໍ້ແທກນ້ຳ (ໜ່ວຍ) | 8.052 |
| ປະເພດຄົວເຮືອນ (ໜ່ວຍ) | 7.656 |
| ປະເພດສຳນັກງານອົງການ (ໜ່ວຍ) | 241 |
| ປະເພດທຸລະກິດ-ການຄ້າ (ໜ່ວຍ) | 155 |
| ປະເພດອຸດສາຫະກຳ (ໜ່ວຍ) | 0 |

### (2) ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງຊຽງຂວາງ




**ຮູບທີ 4.9** ແຜນທີ່ສະແດງ ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງຊຽງຂວາງ

### (3) **ໂຮງງານຜະລິດນ້ຳ**

**ຕາຕະລາງ 4.17** ໂຮງງານຜະລິດນ້ຳປະປາ ຢູ່ ແຂວງຊຽງຂວາງ

| ລ/ດ | ຊື່ເມືອງ/ພື້ນທີ່ບໍລິການ | ໂຮງງານຜະລິດນ້ຳ | ຄວາມສາມາດ (ມ³/ມື້) | ນ້ຳຜະລິດ (ມ³/ປີ) | ປີນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ມ. ແປກ | ໂຮງງານພູຈັນ (ຕອງຊ້າງ) | 5.500 | 1.678.238 | 1999 | ນ້ຳອອກບໍ່ (ຫ້ວຍຊ້າງ, ຜາແຕກ, ໜອງໂລ່) | ADB |
| | | ໂຮງງານພູຈັນ (ຕອງໄວ) | 4.000 | | 2013 | | ບ/ສ ພູເບ້ຍ |
| | | ໂຮງງານບ້ານພຽງຫຼວງ | 25.000 | 105.660 | 2018 | ນ້ຳງື່ມ | ລັດຖະບານ |
| 2 | ມ. ພູກູດ | | | 10.975 | | | |
| 3 | ມ. ຄຳ | ໂຮງງານພູເມືອງ | 2.143 | 700.920 | 2005 | ຫ້ວຍຕາດເປີບ | ADB |
| 4 | ມ. ຄູນ | ໂຮງງານບ້ານໂພນແຍງ | 920 | 160.420 | 2011 | ນ້ຳແລມ,ນ້ຳງຽບ | ADB |
| 5 | ມ. ໜອງແຮດ | ໂຮງງານໜອງຊຽວ | 350 | 19.155 | 2018 | ນ້ຳອອກບໍ່ໜອງຊຽວ | ລັດຖະບານ |
| | | ໂຮງງານນ້ຳກອງ | 350 | - | 2018 | ນ້ຳອອກບໍ່ ຖ້ຳໄຊ | ລັດຖະບານ |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 27.02.2018, ໄດ້ນຳໃຊ້ປີ 2018-2019

**ຕາຕະລາງ 4.18** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງຊຽງຂວາງ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2018 | 2019 |
|---|---|---|---|---|
| I | ຄົວເຮືອນ | | | |
| | 0-7 ມ³ | ກີບ/ມ³ | 2.500 | 2.625 |
| | 8-15 ມ³ | | 5.000 | 5.250 |
| | > 15 ມ³ | | 6.500 | 6.825 |
| II | ສຳນັກງານອົງການຂອງລັດ | | | |
| | 0-25 ມ³ | ກີບ/ມ³ | 6.000 | 6.300 |
| | 26-50 ມ³ | | 6.500 | 6.825 |
| | > 50 ມ³ | | 7.500 | 7.875 |
| III | ທຸລະກິດ-ການຄ້າ ແລະ ອຸດສະຫະກຳ | | | |
| | 0-25 ມ³ | ກີບ/ມ³ | 7.300 | 7.350 |
| | 26-50 ມ³ | | 7.950 | 8.000 |
| | > 50 ມ³ | | 8.450 | 8.500 |

## 4.10 ແຂວງວຽງຈັນ

### (1) ຂໍ້ມູນພື້ນຖານ

| | | | |
|---|---|---|---|
| ເນື້ອທີ່ທັງໝົດ (km²) | 15.972 | ພື້ນທີ່ໃຫ້ການບໍລິການ (ເມືອງ) | 8 |
| ຈຳນວນປະຊາກອນ (ຄົນ) | 454.420 | ຈຳນວນໝໍ້ແທກນໍ້າ (ໜ່ວຍ) | 12.265 |
| ຈຳນວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | 99.228 | ປະເພດຄົວເຮືອນ (ໜ່ວຍ) | 10.248 |
| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 58.530 | ປະເພດສຳນັກງານອົງການ (ໜ່ວຍ) | 288 |
| ຈຳນວນພະນັກງານຖາວອນ (ຄົນ) | 90 | ປະເພດທຸລະກິດ-ການຄ້າ (ໜ່ວຍ) | 1.458 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | 11 | ປະເພດອຸດສາຫະກຳ (ໜ່ວຍ) | 271 |

### (2) ທີ່ຕັ້ງໂຮງງານ ແລະ ພື້ນທີ່ບໍລິການ ນໍ້າປະປາ ຂອງ ລັດວິສາຫະກິດນໍ້າປະປາ ແຂວງວຽງຈັນ




**ຮູບທີ 4.10** ແຜນທີ່ສະແດງທີ່ຕັ້ງໂຮງງານ ແລະ ພື້ນທີ່ບໍລິການ ນໍ້າປະປາ ຂອງ ລັດວິສາຫະກິດນໍ້າປະປາ ແຂວງວຽງຈັນ

(3) **ໂຮງງານຜະລິດນ້ຳປະປາ**

**ຕາຕະລາງ 4.19** ໂຮງງານຜະລິດນ້ຳປະປາ ຢູ່ ແຂວງວຽງຈັນ

| ລ/ດ | ຊື່ເມືອງ/ພື້ນທີ່ບໍລິການ | ໂຮງງານຜະລິດນ້ຳ | ຄວາມສາມາດ (ມ³/ມື້) | ນ້ຳຜະລິດ (ມ³/ປີ) | ປີ ນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ມ. ວັງວຽງ | ໂຮງງານ ວັງວຽງ | 3.600 | 1.306.64 1 | 1996 | ນ້ຳແກ້ງຫຍຸຍ | AFD/ADB |
| 2 | ມ. ທຸລະຄົມ | ໂຮງງານ ບ້ານທົ່ນ | 600 | 271.152 | 1995 | ນ້ຳງື່ມ | AFD |
| 3 | ມ. ໂພນໂຮງ | ໂຮງງານ ບ. ກົກກ້ຽງ | 2.400 | 585.401 | 1998 | ນ້ຳລີກ | ADB |
| 4 | ເຂດຫຼັກ 52 | ໂຮງງານ ນ້ຳຊອງ | 2.670 | 923.051 | 2006 | ນ້ຳຊອງ | ADB |
| 5 | ມ. ແກ້ວອຸດົມ | ໂຮງງານ ທ່າລາດ | 4.300 | 751.391 | 2010 | ນ້ຳງື່ມ | ADB |
| 6 | ມ. ຊະນະຄາມ | ໂຮງງານ ຊະນະຄາມ | 1.240 | 405.832 | 2010 | ນ້ຳຂອງ | ADB |
| 7 | ມ. ວຽງຄຳ | ໂຮງງານ ນາພົນ-ຖິ່ນຍຸງ | 490 | 103.712 | 2010 | ນ້ຳງື່ມ | KOICA |
| 8 | ບ. ວຽງໄຊ-ຫ້ວຍງາມ | ໂຮງງານ ບ. ຫ້ວຍງາມ | 150 | 34.839 | 2010 | ນ້ຳພາດານ | K-Water |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 05.12.2014, ນຳໃຊ້ປີ 2015 ຈົນເຖິງປະຈຸບັນ

**ຕາຕະລາງ 4.20** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງວຽງຈັນ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2015 | 2016 |
|---|---|---|---|---|
| I | ຄົວເຮືອນ, ທຸລະກິດ-ການຄ້າ | | | |
| | 0-7 ມ³ | | 3.180 | 3,180 |
| | 8-15 ມ³ | ກີບ/ມ³ | 3.600 | 3.600 |
| | > 15 ມ³ | | 4.300 | 4.300 |
| II | ສຳນັກງານອົງການລັດ-ລວມໝູ່ | ກີບ/ມ³ | 4.300 | 4.300 |

## 4.11 ແຂວງບໍລິຄໍາໄຊ

### (1) ຂໍ້ມູນພື້ນຖານ

| | |
|---|---|
| ເນື້ອທີ່ທັງໝົດ (km$^2$) | 15.977 |
| ຈຳນວນປະຊາກອນ (ຄົນ) | 290.141 |
| ຈຳນວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | 100.807 |
| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 51.207 |
| ຈຳນວນພະນັກງານຖາວອນ (ຄົນ) | 90 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | 33 |

| | |
|---|---|
| ພື້ນທີ່ໃຫ້ການບໍລິການ (ເມືອງ) | 6 |
| ຈຳນວນໝໍ້ແທກນ້ຳ (ໜ່ວຍ) | 10.673 |
| ປະເພດຄົວເຮືອນ (ໜ່ວຍ) | 9.088 |
| ປະເພດສຳນັກງານອົງການ (ໜ່ວຍ) | 335 |
| ປະເພດທຸລະກິດ-ການຄ້າ (ໜ່ວຍ) | 1.250 |
| ປະເພດອຸດສາຫະກຳ (ໜ່ວຍ) | 0 |

### (2) ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງບໍລິຄໍາໄຊ




**ຮູບທີ 4.11** ແຜນທີ່ສະແດງ ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງບໍລິຄໍາໄຊ

(3) **ໂຮງງານຜະລິດນ້ຳປະປາ**

**ຕາຕະລາງ 4.21** ໂຮງງານຜະລິດນ້ຳປະປາ ຢູ່ ແຂວງບໍລິຄຳໄຊ

| ລ/ດ | ຊື່ເມືອງ/ພື້ນທີ່ບໍລິການ | ໂຮງງານຜະລິດນ້ຳ | ຄວາມສາມາດ (ມ³/ມື້) | ນ້ຳຜະລິດ (ມ³/ປີ) | ປີນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ມ. ປາກຊັນ | ໂຮງງານ ມ. ປາກຊັນ | 4.730 | 1.448.173 | 1998 | ບາດານ | ADB |
| | | ໂຮງງານ ນ້ຳງຽບ | 1.000 | 77.408 | 2018 | ນ້ຳງຽບ | JICA/Tokemi |
| | | ໂຮງງານ ບ. ເອີນທາດ | 800 | 51.822 | 2018 | ບາດານ | ລັດຖະບານ |
| | | ໂຮງງານບ. ບົວແວງຄຳ | 800 | 51.822 | 2011 | ບາດານ | ລັດຖະບານ |
| | | ໂຮງງານ ບ. ສອງຄອນ | 300 | 11.102 | 2014 | ບາດານ | ລັດຖະບານ |
| | | ໂຮງງານ ບ. ປັດຊຸມ | 300 | 9.289 | 2014 | ບາດານ | ລັດຖະບານ |
| | | ໂຮງງານ ບ. ໂນນອຸດົມ | 85 | 3.961 | 2013 | ບາດານ | ລັດຖະບານ |
| 2 | ມ. ບໍລິຄັນ | ໂຮງງານ ມ. ບໍລິຄັນ | 1.900 | 254.531 | 2010 | ນ້ຳຊັນ | KOICA |
| | | ໂຮງງານ ບ. ຜາເມືອງ | 1.250 | 55.560 | 2018 | ບາດານ | ລັດຖະບານ |
| 3 | ມ. ຄຳເກີດ | ໂຮງງານ ຫຼັກຊາວ | 1.750 | 557.397 | 2007 | ນ້ຳພ້າວ | ADB |
| | | ໂຮງງານບ. ໜອງກອກ | 200 | 39.343 | 2017 | ບາດານ | ລັດຖະບານ |
| | | ໂຮງງານ ບ. ທົ່ງແສນ | 825 | 17.686 | 2018 | ບາດານ | ລັດຖະບານ |
| 4 | ມ.ປາກກະດິງ | ໂຮງງານ ບ. ທົ່ງນາມີ | 400 | 52.521 | 2009 | ບາດານ | ລັດຖະບານ |
| | | ໂຮງງານ ບ. ວຽງຄຳ | 400 | 38.618 | 2009 | ບາດານ | ລັດຖະບານ |
| 5 | ມ. ວຽງທອງ | ໂຮງງານ ມ. ວຽງທອງ | 900 | 91.097 | 2015 | ນ້ຳງອມ | ລັດຖະບານ |
| 6 | ມ.ທ່າພະບາດ | ໂຮງງານ ມ. ທ່າພະບາດ | 1.000 | 54.419 | 2018 | ນ້ຳຂອງ | ລັດຖະບານ |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 28.09.2018, ນຳໃຊ້ປີ 2018-2019

**ຕາຕະລາງ 4.22** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງບໍລິຄຳໄຊ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2018 | 2019 |
|---|---|---|---|---|
| I | ຄົວເຮືອນ | | | |
| | 0-7 ມ³ | ກີບ/ມ³ | 3.068 | 3.252 |
| | 8-15 ມ³ | | 3.963 | 4.241 |
| | > 15 ມ³ | | 4.718 | 5.048 |
| II | ສຳນັກງານອົງການຂອງລັດ | ກີບ/ມ³ | 5.340 | 5.714 |
| III | ທຸລະກິດ-ການຄ້າ ແລະ ອຸດສະຫະກຳ | ກີບ/ມ³ | 5.603 | 5.995 |
| **ລາຄາສະເລ່ຍ** | | **ກີບ/ມ³** | **5.603** | **5.995** |

## 4.12 ແຂວງຄໍາມ່ວນ

### (1) ຂໍ້ມູນພື້ນຖານ

| | |
|---|---|
| ເນື້ອທີ່ທັງໝົດ (km²) | 16.315 |
| ຈໍານວນປະຊາກອນ (ຄົນ) | 415.899 |
| ຈໍານວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | 89.964 |
| ຈໍານວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 47.746 |
| ຈໍານວນພະນັກງານຖາວອນ (ຄົນ) | 154 |
| ຈໍານວນພະນັກງານສັນຍາຈ້າງ (ຄົນ) | 53 |

| | |
|---|---|
| ພື້ນທີ່ໃຫ້ການບໍລິການ (ເມືອງ) | 5 |
| ຈໍານວນໝໍ້ແທກນໍ້າ (ໜ່ວຍ) | 10.761 |
| ປະເພດຄົວເຮືອນ (ໜ່ວຍ) | 9.322 |
| ປະເພດສໍານັກງານອົງການ (ໜ່ວຍ) | 295 |
| ປະເພດທຸລະກິດ-ການຄ້າ (ໜ່ວຍ) | 1.112 |
| ປະເພດອຸດສາຫະກໍາ (ໜ່ວຍ) | 32 |

### (2) ພື້ນທີ່ບໍລິການນໍ້າປະປາ ຂອງ ລັດວິສາຫະກິດນໍ້າປະປາ ແຂວງຄໍາມ່ວນ




**ຮູບທີ 4.12** ແຜນທີ່ສະແດງ ພື້ນທີ່ບໍລິການນໍ້າປະປາ ຂອງ ລັດວິສາຫະກິດນໍ້າປະປາ ແຂວງຄໍາມ່ວນ

(3) **ໂຮງງານຜະລິດນ້ຳປະປາ**

**ຕາຕະລາງ 4.23** ໂຮງງານຜະລິດນ້ຳປະປາ ຢູ່ ແຂວງຄຳມ່ວນ

| ລ/ດ | ຊື່ເມືອງ/ພື້ນທີ່ບໍລິການ | ໂຮງງານຜະລິດນ້ຳ | ຄວາມສາມາດ (ມ³/ມື້) | ນ້ຳຜະລິດ (ມ³/ປີ) | ປີ ນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ມ. ທ່າແຂກ | ໂຮງງານ ບ້ານຖ້ຳ | 2.000 | 702.305 | 1999 | ນ້ຳບາດານ | EU |
| | | ໂຮງງານ ທ່າແຂກ | 15.000 | 2.735.832 | 2016 | ນ້ຳຂອງ | JICA |
| 2 | ມ. ມະຫາໄຊ | ໂຮງງານ ມະຫາໄຊ | 600 | 230.858 | 1998 | ນ້ຳເຊບັ້ງໄຟ | ລັດຖະບານ |
| 3 | ມ. ໜອງບົກ | ໂຮງງານ ໜອງບົກ | 1.500 | 228.476 | 2004 | ນ້ຳເຊບັ້ງໄຟ | ADB |
| 4 | ມ. ເຊບັ້ງໄຟ | ໂຮງງານ ເຊບັ້ງໄຟ | 900 | 278.059 | 2012 | ນ້ຳເຊບັ້ງໄຟ | KOICA |
| 5 | ມ. ນາກາຍ | ໂຮງງານ ນາກາຍ | 720 | 29.804 | 2018 | ອ່າງນ້ຳເທີນ II | ລັດຖະບານ |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 03.03.2008, ນຳໃຊ້ປີ 2008-2010 ແລະ ນຳໃຊ້ເຖິງປັດຈຸບັນ

**ຕາຕະລາງ 4.24** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງຄຳມ່ວນ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2008 | 2009 | 2010 |
|---|---|---|---|---|---|
| I | ຄົວເຮືອນ | ກີບ/ມ³ | 2.300 | 2.500 | 2.800 |
| II | ສຳນັກງານອົງການຂອງລັດ | | 3.050 | 3.350 | 3.700 |
| III | ທຸລະກິດ,ອຸດສາຫະກຳ, ການຄ້າ | | 3.250 | 3.550 | 3.900 |
| IV | ອຸດສາຫະກຳ | | 3.750 | 4.150 | 4.550 |
| V | ຊ່າວຕ່າງດ້າວ | | 3.750 | 4.150 | 4.550 |

## 4.13 ແຂວງສະຫວັນນະເຂດ

### (1) ຂໍ້ມູນພື້ນຖານ

| | | | |
|---|---|---|---|
| ເນື້ອທີ່ທັງໝົດ (km$^2$) | 21.774 | ພື້ນທີ່ໃຫ້ການບໍລິການ (ເມືອງ) | 11 |
| ຈຳນວນປະຊາກອນ (ຄົນ) | 1.016.991 | ຈຳນວນໝໍ້ແທກນ້ຳ (ໜ່ວຍ) | 25.630 |
| ຈຳນວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | - | ປະເພດຄົວເຮືອນ (ໜ່ວຍ) | 22.975 |
| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 149.553 | ປະເພດສຳນັກງານອົງການ (ໜ່ວຍ) | 474 |
| ຈຳນວນພະນັກງານຖາວອນ (ຄົນ) | 75 | ປະເພດທຸລະກິດ-ການຄ້າ (ໜ່ວຍ) | 2.172 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | 4 | ປະເພດອຸດສາຫະກຳ (ໜ່ວຍ) | 9 |

### (2) ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງສະຫວັນນະເຂດ




**ຮູບທີ 4.13** ແຜນທີ່ສະແດງ ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງສະຫວັນນະເຂດ

(3) **ໂຮງງານຜະລິດນ້ຳປະປາ**

**ຕາຕະລາງ 4.25** ໂຮງງານຜະລິດນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງສະຫວັນນະເຂດ

| ລ/ດ | ຊື່ເມືອງ/ພື້ນທີ່ ບໍລິການ | ໂຮງງານຜະລິດນ້ຳ | ຄວາມສາມາດ (ມ3/ມື້) | ນ້ຳຜະລິດ (ມ3/ປີ) | ປີ ນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ນະຄອນ ໄກ ສອນ ພົມວິຫານ | ໂຮງງານນາແຜ | 42.580 | 8.241.778 | 2018 | ນ້ຳຂອງ | GoL-DKLS |
| 2 | ມ. ອຸທຸມພອນ | ໂຮງງານ ມ. ອຸທຸມພອນ | 3.500 | 396.264 | 2004 | ນ້ຳບາດານ | ADB |
| 3 | ມ. ອາດສະພັງທອງ | ໂຮງງານ ມ. ອາດສະພັງ ທອງ | 1.200 | 53.252 | 2012 | ນ້ຳບາດານ | UN-Habitat |
| 4 | ມ. ພິນ | ໂຮງງານ ມ. ພິນ | 1.200 | 66.117 | 2010 | ນ້ຳບາດານ | UN-Habitat |
| 5 | ເຂດແດນສະຫວັນ | ໂຮງງານເຂດແດນສະຫວັນ | 1.500 | 302.490 | 2011 | ເຊໂປນ | ລັດຖະ ບານ |
| 6 | ມ. ນອງ | ໂຮງງານ ມ. ນອງ | 300 | 59.573 | 2004 | ນ້ຳບາດານ | BTC |
| 7 | ມ. ທ່າປາງທອງ | ໂຮງງານ ມ. ທ່າປາງທອງ | 300 | 33.972 | 2004 | ນ້ຳບາດານ | BTC |
| 8 | ມ. ສອງຄອນ | ໂຮງງານ ມ. ສອງຄອນ | 3.200 | 477.561 | 2015 | ເຊບັ້ງຫຽງ | ADB |
| 9 | ມ. ຈຳພອນ | ໂຮງງານ ມ. ຈຳພອນ | 1.800 | 512.243 | 2004 | ນ້ຳຝາຍບັກ | BTC |
| 10 | ມ. ໄຊບູລີ | ໂຮງງານ ມ. ໄຊບູລີ | 2.400 | 53.292 | 2016 | ເຊບັ້ງໄຟ | NEDA |
| 11 | ມ. ວິລະບູລີ | ໂຮງງານ ມ. ວິລະບູລີ | 1.000 | 103.551 | 2015 | ຫ້ວຍຄຽງ | UN-Habitat |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 02.01.2013, ນຳໃຊ້ປີ 2013-2015 ແລະ ນຳໃຊ້ເຖິງປັດຈຸບັນ

**ຕາຕະລາງ 4.26** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງສະຫວັນນະເຂດ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| I | ຄົວເຮືອນ | | | | |
| | 0-7 ມ$^3$ | ກີບ/ມ$^3$ | 1.802 | 1.910 | 2.025 |
| | 8-15 ມ$^3$ | | 2.650 | 2.809 | 2.978 |
| | > 15 ມ$^3$ | | 3.498 | 3.708 | 3.930 |
| II | ສຳນັກງານອົງການຂອງລັດ | ກີບ/ມ$^3$ | 2.650 | 2.809 | 2.978 |
| III | ທຸລະກິດ-ການຄ້າ ແລະ ອຸດສະຫະກຳ | ກີບ/ມ$^3$ | 4.685 | 4.966 | 5.264 |

## 4.14 **ແຂວງສາລະວັນ**

### (1) **ຂໍ້ມູນພື້ນຖານ**

| | |
|---|---:|
| ເນື້ອທີ່ທັງໝົດ (km$^2$) | 10.691 |
| ຈຳນວນປະຊາກອນ (ຄົນ) | 423.399 |
| ຈຳນວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | 65.407 |
| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 48.070 |
| ຈຳນວນພະນັກງານຖາວອນ (ຄົນ) | 57 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | 8 |

| | |
|---|---:|
| ພື້ນທີ່ໃຫ້ການບໍລິການ (ເມືອງ) | 8 |
| ຈຳນວນໜໍ່ແຫກນ້ຳ (ໜ່ວຍ) | 8.385 |
| ປະເພດຄົວເຮືອນ (ໜ່ວຍ) | 7.759 |
| ປະເພດສຳນັກງານອົງການ (ໜ່ວຍ) | 246 |
| ປະເພດທຸລະກິດ-ການຄ້າ (ໜ່ວຍ) | 380 |
| ປະເພດອຸດສາຫະກຳ (ໜ່ວຍ) | 0 |

### (2) **ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງສາລະວັນ**




**ຮູບທີ 4.14** ແຜນທີ່ສະແດງ ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງສາລະວັນ

(3) **ໂຮງງານຜະລິດນ້ຳປະປາ**

**ຕາຕະລາງ 4.27** ໂຮງງານຜະລິດນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງສາລະວັນ

| ລ/ດ | ຊື່ເມືອງ/ພື້ນທີ່ບໍລິການ | ໂຮງງານຜະລິດນ້ຳ | ຄວາມສາມາດ (ມ³/ມື້) | ນ້ຳຜະລິດ (ມ³/ປີ) | ປີນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ມ. ສາລະວັນ | ໂຮງງານ ມ. ສາລະວັນ | 2.400 | 937.757 | 1997 | ເຊໂດນ | ADB |
| 2 | ມ. ເລົ່າງາມ | ໂຮງງານ ມ. ເລົ່າງາມ | 1.100 | 231.275 | 2004 | ຫ້ວຍຕະກິດ | BTC |
| 3 | ມ. ຄົງເຊໂດນ | ໂຮງງານ ມ. ຄົງເຊໂດນ | 1.100 | 306.706 | 2006 | ເຊໂດນ | ADB |
| 4 | ມ. ລະຄອນເພັງ | ໂຮງງານມ. ລະຄອນເພັງ | 600 | 97.283 | 2015 | ເຊນອນ | ລັດຖະບານ |
| 5 | ມ. ວາປີ | ໂຮງງານ ມ. ວາປີ | 1.300 | 47.543 | 2015 | ເຊໂດນ | ລັດຖະບານ |
| 6 | ມ. ຕຸ້ມລານ | ໂຮງງານ ມ. ຕຸ້ມລານ | 400 | 44.091 | 2015 | ເຊກອນ | ລັດຖະບານ |
| 7 | ມ. ຕະໂອ້ຍ | ໂຮງງານ ມ. ຕະໂອ້ຍ | 400 | 144.978 | 2015 | ຫ້ວຍໄລ່ | ລັດຖະບານ |
| 8 | ມ. ສະໝ້ວຍ | ໂຮງງານ ມ. ສະໝ້ວຍ | 400 | 49.568 | 2015 | ເຊໂປນ | ລັດຖະບານ |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 29.12.2013, ນຳໃຊ້ປີ 2013-2015 ແລະ ນຳໃຊ້ເຖິງປັດຈຸບັນ

**ຕາຕະລາງ 4.28** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງສາລະວັນ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| I | ຄົວເຮືອນ | | | | |
| | 0-7 ມ³ | | 2.000 | 2.100 | 2.200 |
| | 8-15 ມ³ | ກີບ/ມ³ | 3.700 | 4.000 | 4.200 |
| | > 15 ມ³ | | 4.700 | 5.000 | 5.200 |
| II | ສຳນັກງານອົງການຂອງລັດ | ກີບ/ມ³ | 4.700 | 5.000 | 5.200 |
| III | ທຸລະກິດ-ການຄ້າ ແລະ ອຸດສາຫະກຳ | ກີບ/ມ³ | 5.900 | 6.200 | 6.600 |
| **ລາຄາສະເລ່ຍ** | | **ກີບ/ມ³** | **3.500** | **3.700** | **4.000** |

## 4.15 ແຂວງເຊກອງ

### (1) ຂໍ້ມູນພື້ນຖານ

| | |
|---|---|
| ນື້ອທີ່ທັງໝົດ (km$^2$) | 7.750 |
| ຈຳນວນປະຊາກອນ (ຄົນ) | 123.327 |
| ຈຳນວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | 54.780 |
| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 47.816 |
| ຈຳນວນພະນັກງານຖາວອນ (ຄົນ) | 58 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | 2 |

| | |
|---|---|
| ພື້ນທີ່ໃຫ້ການບໍລິການ (ເມືອງ) | 4 |
| ຈຳນວນໝໍ້ແທກນ້ຳ (ໜ່ວຍ) | 7.929 |
| ປະເພດຄົວເຮືອນ (ໜ່ວຍ) | 7.647 |
| ປະເພດສຳນັກງານອົງການ (ໜ່ວຍ) | 205 |
| ປະເພດທຸລະກິດ-ການຄ້າ (ໜ່ວຍ) | 77 |
| ປະເພດອຸດສາຫະກຳ (ໜ່ວຍ) | 0 |

### (2) ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງເຊກອງ




**ຮູບທີ 4.15** ແຜນທີ່ສະແດງ ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງເຊກອງ

### (3) ໂຮງງານຜະລິດນ້ຳປະປາ

**ຕາຕະລາງ 4.29** ໂຮງງານຜະລິດນ້ຳປະປາ ຢູ່ ແຂວງເຊກອງ

| ລ/ດ | ຊື່ເມືອງ/ພື້ນທີ່ບໍລິການ | ໂຮງງານຜະລິດນ້ຳ | ຄວາມສາມາດ ($ມ^3$/ມື້) | ນ້ຳຜະລິດ ($ມ^3$/ປີ) | ປີ ນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ມ. ລະມາມ | ຮງ. ຜະລິດນ້ຳ ຕາດເຮ້ຍ | 2.000 | 1.317.123 | 2001 | ຫ້ວຍໂຫນ | ADB |
| | | ຮງ. ຜະລິດນ້ຳບ້ານແບ່ງ | 3.000 | | 2009 | ນ້ຳອອກບໍ່ | ລັດຖະບານ |
| 2 | ມ. ທ່າແຕງ | ຮງ. ຜະລິດນ້ຳ ກົງຕາຢຸນ | 2.700 | 214.654 | 2015 | ຫ້ວຍນ້ຳໃສ | ADB |
| 3 | ມ. ກະລຶມ | ຮງ. ຜະລິດນ້ຳ ແກ້ງກວຽນ | 400 | 103.099 | 2015 | ຫ້ວຍນ້ຳລາດ | ລັດຖະບານ |
| 4 | ມ. ດາກຈຶງ | ຮງ. ຜະລິດນ້ຳ ໂນນສະຫວັນ | 300 | 28.294 | 2006 | ນ້ຳຫ້ວຍ | ລັດຖະບານ |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 20.02.2012, ນຳໃຊ້ປີ 2013-2015 ແລະ ນຳໃຊ້ເຖິງປັດຈຸບັນ

**ຕາຕະລາງ 4.30** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງເຊກອງ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| I | ຄົວເຮືອນ ແລະ ທຸລະກິດ-ການຄ້າ | | | | |
| | 0-7 $ມ^3$ | ກີບ/$ມ^3$ | 2.350 | 2.350 | 2,350 |
| | 8-15 $ມ^3$ | | 3.550 | 3.550 | 3,550 |
| | < 15 $ມ^3$ | | 5.300 | 5.300 | 5,300 |
| II | ສຳນັກງານອົງການຂອງລັດ | ກີບ/$ມ^3$ | 5.300 | 5.300 | 5,300 |

## 4.16 ແຂວງຈຳປາສັກ

### (1) ຂໍ້ມູນພື້ນຖານ

| | |
|---|---|
| ເນື້ອທີ່ທັງໝົດ (km²) | 15.350 |
| ຈຳນວນປະຊາກອນ (ຄົນ) | 186.911 |
| ຈຳນວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | 194.081 |
| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 112.864 |
| ຈຳນວນພະນັກງານຖາວອນ (ຄົນ) | 109 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | 110 |

| | |
|---|---|
| ພື້ນທີ່ໃຫ້ການບໍລິການ (ເມືອງ) | 4 |
| ຈຳນວນໝໍ້ແທກນ້ຳ (ໜ່ວຍ) | 21.292 |
| ປະເພດຄົວເຮືອນ (ໜ່ວຍ) | 19.183 |
| ປະເພດສຳນັກງານອົງການ (ໜ່ວຍ) | 235 |
| ປະເພດທຸລະກິດ-ການຄ້າ (ໜ່ວຍ) | 2.340 |
| ປະເພດອຸດສາຫະກຳ (ໜ່ວຍ) | 171 |

### (2) ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງຈຳປາສັກ




**ຮູບທີ 4.16** ແຜນທີ່ສະແດງ ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງຈຳປາສັກ

(3) **ໂຮງງານຜະລິດນ້ຳ**

**ຕາຕະລາງ 4.31** ໂຮງງານຜະລິດນ້ຳປະປາ ຢູ່ ແຂວງຈຳປາສັກ

| ລ/ດ | ຊື່ເມືອງ/ພື້ນທີ່ບໍລິການ | ໂຮງງານຜະລິດນ້ຳ | ຄວາມສາມາດ (ມ³/ມື້) | ນ້ຳຜະລິດ (ມ³/ປີ) | ປີນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ນະຄອນປາກເຊ | ໂຮງງານໂພນສະຫວັນ | 15.000 | 6.267.309 | 1997 | ນ້ຳຂອງ | AFD/ADB |
| 2 | ມ. ໂພນທອງ | ໂຮງງານພູສະເຫຼົາ | 2.100 | 540.685 | 2006 | ນ້ຳຂອງ | ADB |
| 3 | ມ.ໂຂງ | ໂຮງງານພູຂຽວ | 720 | 291.373 | 2016 | ນ້ຳຂອງ | ADB/NEDA |
| 4 | ມ.ຈຳປາສັກ | ໂຮງງານທ່າຕານ | 2.890 | 118.072 | 2016 | ນ້ຳຂອງ | ADB |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 14.12.2012, ນຳໃຊ້ປີ 2013-2015 ແລະ ນຳໃຊ້ເຖິງປັດຈຸບັນ

**ຕາຕະລາງ 4.32** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງຈຳປາສັກ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| I | ຄົວເຮືອນ | | | | |
| | 0-7 ມ³ | | 2.370 | 2.370 | 2.500 |
| | 8-15 ມ³ | ກີບ/ມ³ | 3.670 | 3.670 | 3.800 |
| | >15 ມ³ | | 4.770 | 4.770 | 5.000 |
| II | ສຳນັກງານອົງການ ແລະ ທຸລະກິດ-ການຄ້າ | ກີບ/ມ³ | 4.770 | 4.770 | 5.000 |
| **ລາຄາສະເລ່ຍ** | | **ກີບ/ມ³** | **3.760** | **3.760** | **3.920** |

## 4.17 ແຂວງອັດຕະປື

### (1) ຂໍ້ມູນພື້ນຖານ

| | |
|---|---|
| ເນື້ອທີ່ທັງໝົດ (km$^2$) | 10.320 |
| ຈຳນວນປະຊາກອນ (ຄົນ) | 150.187 |
| ຈຳນວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | 4.343 |
| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 21.700 |
| ຈຳນວນພະນັກງານຖາວອນ (ຄົນ) | 42 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | 4 |

| | |
|---|---|
| ພື້ນທີ່ໃຫ້ການບໍລິການ (ເມືອງ) | 2 |
| ຈຳນວນໝໍ້ແທກນ້ຳ (ໜ່ວຍ) | 4.340 |
| ປະເພດຄົວເຮືອນ (ໜ່ວຍ) | 3.380 |
| ປະເພດສຳນັກງານອົງການ (ໜ່ວຍ) | 71 |
| ປະເພດທຸລະກິດ-ການຄ້າ (ໜ່ວຍ) | 210 |
| ປະເພດອຸດສາຫະກຳ (ໜ່ວຍ) | 679 |

### (2) ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງອັດຕະປື




**ຮູບທີ 4.17** ແຜນທີ່ສະແດງ ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງອັດຕະປື

(3) **ໂຮງງານຜະລິດນ້ຳປະປາ**

**ຕາຕະລາງ 4.33** ໂຮງງານຜະລິດນ້ຳປະປາ ຢູ່ ແຂວງອັດຕະປື

| ລ/ດ | ພື້ນທີ່ບໍລິການ | ຊື່ໂຮງງານຜະລິດນ້ຳ | ຄວາມສາມາດ ($ມ^3$/ມື້) | ນ້ຳຜະລິດ ($ມ^3$/ປີ) | ປີນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ມ.ສາມັກຄີໄຊ | ໂຮງງານ ທ່າຫີນ | 1.800 | 526.223 | 2006 | ເຊກອງ | ADB |
| 2 | ມ. ໄຊເສດຖາ | ໂຮງງານ ບ້ານຊ້າຍ | 2.500 | 128.810 | 2015 | ເຊກະໝານ | ADB |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 14.12.2012, ນຳໃຊ້ປີ 2013-2015 ແລະ ນຳໃຊ້ເຖິງປັດຈຸບັນ

**ຕາຕະລາງ 4.34** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງອັດຕະປື

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| I | ຄົວເຮືອນ | | | | |
| | 0-7 $ມ^3$ | ກີບ/$ມ^3$ | 3.535 | 3.641 | 3.823 |
| | 8-15 $ມ^3$ | | 3.959 | 4.235 | 4.660 |
| | >15 $ມ^3$ | | 4.478 | 4.926 | 5.665 |
| II | ສຳນັກງານອົງການ ແລະ ທຸລະກິດ-ການຄ້າ | ກີບ/$ມ^3$ | 5.255 | 5.662 | 6.047 |
| **ລາຄາສະເລ່ຍ** | | **ກີບ/$ມ^3$** | **3.699** | **3.961** | **4.730** |

## 4.18 ແຂວງໄຊສົມບູນ

### (1) ຂໍ້ມູນພື້ນຖານ

| | | | |
|---|---|---|---|
| ເນື້ອທີ່ທັງໝົດ (km²) | ບໍ່ມີຂໍ້ມູນ | ພື້ນທີ່ໃຫ້ການບໍລິການ (ເມືອງ) | 1 |
| ຈຳນວນປະຊາກອນ (ຄົນ) | 92.682 | ຈຳນວນໜໍ້ແທກນ້ຳ (ໜ່ວຍ) | 954 |
| ຈຳນວນປະຊາກອນ ໃນພື້ນທີ່ບໍລິການໃນແຜນ 2020 (ຄົນ) | 6.065 | ປະເພດຄົວເຮືອນ (ໜ່ວຍ) | 833 |
| ຈຳນວນປະຊາກອນທີ່ໄດ້ຮັບບໍລິການ (ຄົນ) | 3.701 | ປະເພດສຳນັກງານອົງການ (ໜ່ວຍ) | 86 |
| ຈຳນວນພະນັກງານຖາວອນ (ຄົນ) | 16 | ປະເພດທຸລະກິດ-ການຄ້າ (ໜ່ວຍ) | 35 |
| ຈຳນວນພະນັກງານສັນຍາຈ້າງ (ຄົນ) | 2 | ປະເພດອຸດສາຫະກຳ (ໜ່ວຍ) | - |

### (2) ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງໄຊສົມບູນ




**ຮູບທີ 4.18** ແຜນທີ່ສະແດງ ພື້ນທີ່ບໍລິການນ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງໄຊສົມບູນ

(3) **ໂຮງງານຜະລິດນ້ຳປະປາ**

**ຕາຕະລາງ 4.35** ໂຮງງານຜະລິດນ້ຳປະປາ ຢູ່ ແຂວງໄຊສົມບູນ

| ລ/ດ | ພື້ນທີ່ບໍລິການ | ຊື່ໂຮງງານຜະລິດນ້ຳ | ຄວາມສາມາດ (ມ³/ມື້) | ນ້ຳຜະລິດ (ມ³/ປີ) | ປີນຳໃຊ້ | ແຫຼ່ງນ້ຳດິບ | ໝາຍເຫດ (ແຫຼ່ງທຶນ) |
|---|---|---|---|---|---|---|---|
| 1 | ມ. ອານຸວົງ | ໂຮງງານ ມ. ອານຸວົງ | 1.500 | 363.207 | 2003 | ນ້ຳຈັ້ງ | ສສ. ຫວຽດນາມ |

(4) **ລາຄານ້ຳປະປາ**: ອະນຸມັດໃນວັນທີ 05.12.2014, ນຳໃຊ້ປີ 2015-2016 ແລະ ນຳໃຊ້ເຖິງປັດຈຸບັນ

**ຕາຕະລາງ 4.36** ລາຄານ້ຳປະປາ ຂອງ ລັດວິສາຫະກິດນ້ຳປະປາ ແຂວງໄຊສົມບູນ

| ລ/ດ | ປະເພດຜູ້ໃຊ້ນ້ຳ | ຫົວໜ່ວຍ | 2015 | 2016 |
|---|---|---|---|---|
| I | ຄົວເຮືອນ, ທຸລະກິດ-ການຄ້າ | | | |
| | 0-7 ມ³ | | 3.180 | 3.180 |
| | 8-15 ມ³ | ກີບ/ມ³ | 3.600 | 3.600 |
| | < 15 ມ³ | | 4.300 | 4.300 |
| II | ສຳນັກງານອົງການລັດ-ລວມໝູ່ | ກີບ/ມ³ | 4.300 | 4.300 |

**ໝາຍເຫດ:** ເນື່ອງຈາກເຄີຍເປັນສາຂາ ຂອງລັດວິສາຫະກິດນ້ຳປະປາ ແຂວງວຽງຈັນ ແລະ ລາຄານ້ຳປະປາ ທີ່ນຳໃຊ້ໃນປັດຈຸບັນ ຈຶ່ງເປັນລາຄາດຽວກັນ, ປັດຈຸບັນ ຢູ່ໃນໄລຍະສະເໜີ ເພື່ອທົບທວນ-ປັບປຸງ.

## 5. ຜົນການຕິດຕາມ ແລະ ປະເມີນຜົນ ຂອງວຽກງານດັດສົມທຸລະກິດນ້ຳປະປາ

ແຜນດຳເນີນທຸລະກິດ ເປັນວຽກງານໜຶ່ງ ໃນການຕິດຕາມປະເມີນຜົນ ຂອງວຽກງານດັດສົມທຸລະກິດນ້ຳປະປາ ເນື່ອງຈາກວ່າວຽກງານດັ່ງກ່າວ ເປັນເຄື່ອງມືໃຫ້ແກ່ ຄະນະສະພາບໍລິຫານລັດວິສາຫະກິດ ທີ່ໃຊ້ຕິດຕາມ-ກວດກາ ແລະ ຊີ້ນຳ ການດຳເນີນທຸລະກິດ ຂອງລັດວິສາຫະກິດນ້ຳປະປາ ໃຫ້ສາມາດບັນລຸໄດ້ຕາມເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນ, ສອດຄ່ອງກັບລະບຽບການ.

**ຕາຕະລາງ** 5.1 ຕາຕະລາງສັງລວມການສ້າງ ແຜນດຳເນີນທຸລະກິດ ຂອງລັດວິສາຫະກິດນ້ຳປະປາ

| ລ/ດ | ລັດວິສາຫະກິດນ້ຳປະປາ | ຈັດຕັ້ງປະຕິບັດຜ່ານມາ | ແຜນດຳເນີນທຸລະກິດ ປີ 2018 | ໝາຍເຫດ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | | | |
| 2 | ແຂວງ ຜົ້ງສາລີ | | 2018-2020 | NORAD |
| 3 | ແຂວງ ຫຼວງນ້ຳທາ | 2012-2014 | 2016-2018 | ADB |
| 4 | ແຂວງ ອຸດົມໄຊ | 2013-2015 | 2017-2019 | ADB/NORAD |
| 5 | ແຂວງ ບໍ່ແກ້ວ | 2012-2013 | 2016-2018 | ADB |
| 6 | ແຂວງ ຫຼວງພະບາງ | 2009-2011 | - | ADB |
| 7 | ແຂວງ ຫົວພັນ | 2013-2015 | 2018-2022 | ADB |
| 8 | ແຂວງ ໄຊຍະບູລີ | 2014-2016 | 2018-2020 | ADB/NORAD |
| 9 | ແຂວງ ຊຽງຂວາງ | | 2017-2019 | NORAD |
| 10 | ແຂວງ ວຽງຈັນ | 2013-2015 | 2016-2018 | ADB |
| 11 | ແຂວງ ບໍລິຄຳໄຊ | 2014-2016 | 2017-2019 | ADB/NORAD |
| 12 | ແຂວງ ຄຳມ່ວນ | | | |
| 13 | ແຂວງ ສະຫວັນນະເຂດ | 2012-2014 | | ADB |
| 14 | ແຂວງ ສາລະວັນ | 2013-2015 | | ADB |
| 15 | ແຂວງ ເຊກອງ | 2013-2015 | | ADB |
| 16 | ແຂວງ ຈຳປາສັກ | 2013-2015 | | ADB |
| 17 | ແຂວງ ອັດຕະປື | 2013-2015 | | ADB |
| 18 | ແຂວງ ໄຊສົມບູນ | | | |

ຈາກຕາຕະລາງຂ້າງເທິງ ເຫັນວ່າ ໃນໄລຍະຜ່ານມາ ກົມນ້ຳປະປາ ໄດ້ຊຸກຍູ້ໃຫ້ ລັດວິສາຫະກິດນ້ຳປະປາ ສ້າງແຜນດຳເນີນທຸລະກິດ ສຳເລັດໄດ້ທັງໝົດ 13 ແຂວງ. ໃນປີ 2018 ໄດ້ສ້າງແຜນດຳເນີນທຸລະກິດສຳເລັດ ຢູ່ແຂວງຜົ້ງສາລີ ແລະ ຊຽງຂວາງ ແລະ ໃນຈຳນວນ 13 ລັດວິສາຫະກິດນ້ຳປະປາ ທີ່ໄດ້ສ້າງຜ່ານມາ ຍັງໄດ້ເຮັດການທົບທວນ ເພື່ອສ້າງແຜນດັ່ງກ່າວຄືນໃໝ່ 7 ແຂວງ ຄື: ຫຼວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ, ຫົວພັນ, ໄຊຍະບູລີ, ວຽງຈັນ ແລະ ບໍລິຄຳໄຊ. ສຳລັບງົບປະມານທີ່ນຳໃຊ້ໃນການສ້າງ ແລະ ທົບທວນນັ້ນ ໄດ້ຈາກການຊ່ວຍເຫຼືອຂອງ ທະນາຄານພັດທະນາອາຊີ (ADB) ແລະ ອົງການພັດທະນາ ຂອງປະເທດນອກແວ ທີ່ຢູ່ພາຍໃຕ້ເງື່ອນໄຂ ແລະ ຄວາມມຸ້ງຫວັງຂອງຜູ້ໃຫ້ທຶນ ທີ່ເສີມສ້າງຄວາມອາດສາມາດ ໃຫ້ລັດວິສາຫະກິດນ້ຳປະປາ ມີຄວາມເຂັ້ມແຂງ.

ສໍາລັບ 3 ລັດວິສາຫະກິດນໍ້າປະປາ ຄື: ນະຄອນຫຼວງວຽງຈັນ, ຄໍາມ່ວນ ແລະ ໄຊສົມບູນ ເຖິງແມ່ນວ່າ ຈະບໍ່ໄດ້ສະແດງໃຫ້ເຫັນ ໃນຕາຕະລາງຂ້າງເທິງນີ້ ແຕ່ລັດວິສາຫະກິດນໍ້າປະປາດັ່ງກ່າວ ໄດ້ມີແຜນປະຈໍາປີ ທີ່ເປັນບ່ອນອີງໃນການດໍາເນີນທຸລະກິດ. ເປົ້າໝາຍ ຂອງກົມນໍ້າປະປາ ຈະໄດ້ໃຫ້ການຊຸກຍູ້ ແລະ ຊ່ວຍສ້າງແຜນດັ່ງກ່າວໃຫ້ໄດ້, ໂດຍເລີ່ມຈາກການກະກຽມ ດ້ານບຸກຄະລາກອນ ແລະ ເກັບກໍາຂໍ້ມູນທີ່ກ່ຽວຂ້ອງ ເພື່ອສ້າງແຜນດໍາເນີນທຸລະກິດ ທີ່ນອນຢູ່ໃນ ໂຄງການພັດທະນາຄວາມອາດສາມາດໃຫ້ແກ່ຂະແໜງນໍ້າປະປາ ຂອງອົງການ JICA ຄື: ນະຄອນຫຼວງວຽງຈັນ ແລະ ແຂວງຄໍາມ່ວນ; ສໍາລັບ ແຂວງໄຊສົມບູນ ຈະໄດ້ຮັບທຶນຊ່ວຍສ້າງຈາກ ທະນາຄານພັດທະນາອາຊີ.

## 6. ການຕິດຕາມ ແລະ ປະເມີນຜົນການດໍາເນີນງານ ຂອງລັດວິສາຫະກິດນໍ້າປະປາ

ການປະເມີນຜົນ ການດໍາເນີນງານໃນປີນີ້ ເປັນປີທໍາອິດ ທີ່ພວກເຮົາໄດ້ລິເລີ່ມ ປະເມີນຜົນການປະຕິ ບັດງານ ຂອງລັດວິສາຫະກິດນໍ້າປະປາ ໃນຂອບເຂດທົ່ວປະເທດ ດ້ວຍການນໍາໃຊ້ 23 ຕົວຊີ້ວັດ. ການວິເຄາະຂໍ້ມູນ ປີ 2018 ຈະມີຄວາມແຕກຕ່າງຈາກ ທີ່ເຄີຍປະຕິບັດແຕ່ປີ 2012-2017 ຜ່ານມາ ທີ່ປະເມີນຜົນ 9 ຕົວຊີ້ວັດ.

ການຕິດຕາມປະເມີນຜົນ ວິເຄາະຕາມຕົວຊີ້ວັດ: ຫາກຜົນການຄິດໄລ່ມີຄ່າ ເປັນໄປໃນທິດທາງບວກ ກໍສະແດງວ່າ ການດໍາເນີນງານມີການຄຸ້ມຄອງດີ ແລະ ພ້ອມດຽວກັນນັ້ນ ຈາກຜົນການດໍາເນີນງານທີ່ດີ ຈະເປັນຕົວປະເມີນໄດ້ວ່າ ການພັດທະນາຂະຫຍາຍລະບົບນໍ້າປະປາມີປະສິດທິຜົນ ຢ່າງເປັນຮູບປະທໍາ ແລະ ສາມາດກວດສອບໄດ້.

6.1 **ຕົວຊີ້ວັດ ການຕິດຕາມ-ປະເມີນຜົນ ດ້ານສິ່ງອໍານວຍຄວາມສະດວກ ໃນລະບົບນໍ້າປະປາ**

**ຕາຕະລາງ 6.1** ຕາຕະລາງສັງລວມຕົວຊີ້ວັດ PI 2006, PI 2007 ແລະ PI 2008

| ຊື່ແຂວງ | ອັດຕາສ່ວນໂຮງງານຜະລິດນໍ້າປະປາ ທີ່ເກີນອາຍຸການນໍາໃຊ້ (PI 2006) | | ອັດຕາສ່ວນປະເພດເຄື່ອງໄຟຟ້າ-ກົນຈັກ ທີ່ເກີນອາຍຸການນໍາໃຊ້ (PI 2007) | | ອັດຕາສ່ວນສາຍທໍ່ ທີ່ເກີນອາຍຸການນໍາໃຊ້ (PI 2008) | |
|---|---|---|---|---|---|---|
| | 2017 | 2018 | 2017 | 2018 | 2017 | 2018 |
| ນະຄອນຫຼວງວຽງຈັນ | 0 | 0 | 7.34 | 7.34 | 3 | 3.04 |
| ແຂວງຜົ້ງສາລີ | 43 | 43 | 0 | 50 | 0 | 0 |
| ແຂວງຫຼວງນໍ້າທາ | 0 | 0 | 0 | 33 | 13.8 | 13.4 |
| ແຂວງອຸດົມໄຊ | 28.57 | 3.70 | 19 | 22 | 0 | 0 |
| ແຂວງບໍ່ແກ້ວ | 0 | 0 | 0.02 | 28 | 0 | 0.36 |
| ແຂວງຫຼວງພະບາງ | 0 | 0 | 26 | 32 | 9.15 | 9 |
| ແຂວງຫົວພັນ | 62 | 61 | 50 | 25 | 0 | 0 |
| ແຂວງໄຊຍະບູລີ | 0 | 0 | 0.5 | 0.31 | 0 | 0 |
| ແຂວງຊຽງຂວາງ | 0 | 0 | 0 | 0 | 0 | 0 |
| ແຂວງວຽງຈັນ | 0 | 0 | 10 | 15 | 0 | 0 |
| ແຂວງບໍລິຄໍາໄຊ | 0 | 0 | 23.4 | 23.4 | 0.1 | 0.05 |
| ແຂວງຄໍາມ່ວນ | 0.01 | 0 | 0 | 0.13 | 0 | 0 |
| ແຂວງສະຫວັນນະເຂດ | 0 | 0 | 0 | 0 | 0 | 0 |
| ແຂວງສາລະວັນ | 0 | 3.8 | 0 | 0 | 0 | 0 |
| ແຂວງເຊກອງ | 0 | 0 | 0 | 0 | 0 | 0 |
| ແຂວງຈໍາປາສັກ | 0 | 0 | 65 | 0 | 0 | 0 |
| ແຂວງອັດຕະປື | 30 | 0.4 | 0.85 | 0.9 | 0 | 0 |
| ແຂວງໄຊສົມບູນ | 0 | 0 | 0 | 20 | 0 | 5 |

**ໝາຍເຫດ**: ຖ້າອາຍຸສິ່ງອໍານວຍຄວາມສະດວກບໍ່ເກີນອາຍຸການນໍາໃຊ້ ຕາມກົດໝາຍສ່ວຍສາອາກອນກໍານົດໄວ້ຂໍ້ມູນນັ້ນເປັນ 0 (ກົດໝາຍວ່າດ້ວຍສ່ວຍສາອາກອນ ມາດຕາ 35: ການຫັກຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່). **ຄວາມໝາຍຕົວຊີ້ວັດ ໂຮງງານຜະລິດນໍ້າປະປາທີ່ເກີນອາຍຸການນໍາໃຊ້ ແມ່ນນັບເອົາກໍາລັງການຜະລິດຂອງໂຮງງານທີ່ເກີນການອອກແບບ.**

ຕົວຊີ້ວັດການຕິດຕາມ-ປະເມີນຜົນ ດ້ານສິ່ງອຳນວຍຄວາມສະດວກໃນລະບົບນ້ຳປະປາ ດ້ານສະຖຽນລະພາບ ແມ່ນປັດໃຈຫຼັກໃນການຜະລິດ ແລະ ໃຫ້ບໍລິການຂອງລັດວິສາຫະກິດນ້ຳປະປາ ເພື່ອໃຫ້ຜູ້ຊົມໃຊ້ໄດ້ຮັບຄວາມສະດວກສະບາຍ, ເກີດຄວາມເພິ່ງພໍໃຈຕໍ່ກັບການບໍລິການ ແລະ ເປັນສິ່ງກຳນົດສະມັດຕະພາບ ການດຳເນີນງານທີ່ພົວພັນໂດຍກົງກັບການໃຊ້ງານ ແລະ ອາຍຸການນຳໃຊ້ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ.

### 6.1.1 ອັດຕາສ່ວນໂຮງງານຜະລິດນ້ຳປະປາ ທີ່ເກີນອາຍຸການນຳໃຊ້ (PI 2006)

ການປະເມີນຜົນດ້ານຕົວຊີ້ວັດ ອັດຕາສ່ວນໂຮງງານຜະລິດນ້ຳປະປາ ທີ່ເກີນອາຍຸການນຳໃຊ້ ແມ່ນເພື່ອໃຫ້ຮູ້ວ່າ ອາຍຸການນຳໃຊ້ຂອງໂຮງງານມີໜ້ອຍ ຫຼື ຫຼາຍເທົ່າໃດ, ການຕີລາຄາ ໂດຍສັງເຂບແບບງ່າຍດາຍກໍ່ຄື: ຖ້າຫາກພື້ນທີ່ບໍລິການໃດ ຫາກມີການສ້າງ ຫຼື ມີການປັບປຸງໂຮງງານຜະລິດນ້ຳປະປາໃໝ່ອັດຕາສ່ວນໂຮງງານ ທີ່ເກີນອາຍຸການນຳໃຊ້ ກໍ່ຫຼຸດໜ້ອຍລົງ.




**ຮູບທີ 6.1** ຮູບສະແດງອັດຕາສ່ວນໂຮງງານຜະລິດນ້ຳປະປາທີ່ເກີນອາຍຸການນຳໃຊ້

ຮູບທີ 6.1 ໄດ້ສະແດງໃຫ້ເຫັນວ່າ ອັດຕາສ່ວນໂຮງງານທີ່ເກີນອາຍຸການນຳໃຊ້ ມີ 4 ລັດວິສາຫະກິດນ້ຳປະປາ ໃນປີ 2017 ຄື: ແຂວງຜົ້ງສາລີ, ອຸດົມໄຊ, ຫົວພັນ ແລະ ອັດຕະປື. ສຳລັບປີ 2018 ມີ 5 ລັດວິສາຫະກິດນ້ຳປະປາ ທີ່ອັດຕາສ່ວນໂຮງງານຜະລິດນ້ຳປະປາ ເກີນອາຍຸການນຳໃຊ້ ຄື: ແຂວງຜົ້ງສາລີ, ອຸດົມໄຊ, ຫົວພັນ, ສາລະວັນ ແລະ ອັດຕະປື; ສ່ວນອີກ 13 ລັດວິສາຫະກິດນ້ຳປະປາ ແມ່ນຍັງບໍ່ເກີນອາຍຸການນຳໃຊ້. ສະນັ້ນ, ຈຶ່ງເວົ້າໄດ້ວ່າ ສະມັດຕະພາບຂອງການນຳໃຊ້ໂຮງງານຜະລິດນ້ຳປະປາ ຍັງບໍ່ທັນ ໄດ້ນຳໃຊ້ເຕັມອັດຕາເທື່ອ (ລາຍລະອຽດອາຍຸການໃຊ້ງານໂຮງງານຜະລິດນ້ຳປະປາ ເບິ່ງຕາຕະລາງ ທີ 6.3).

### 6.1.2 ອັດຕາສ່ວນປະເພດເຄື່ອງໄຟຟ້າ-ກົນຈັກ ທີ່ເກີນອາຍຸການນຳໃຊ້ (PI 2007)

ຕົວຊີ້ວັດນີ້ ແມ່ນຊີ້ບອກອັດຕາສ່ວນ ຈຳນວນເຄື່ອງຈັກ-ອຸປະກອນທີ່ເກີນອາຍຸການນຳໃຊ້ ຕາມລະບຽບການ ຕໍ່ກັບຈຳນວນທັງໝົດ ຂອງເຄື່ອງມື-ອຸປະກອນປະເພດເຄື່ອງໄຟຟ້າ-ເຄື່ອງກົນຈັກ-ເຄື່ອງວັດແທກຕ່າງໆ ທີ່ຕິດຕັ້ງຢູ່ກັບລະບົບໂຄງລ່າງນ້ຳປະປາ.




**ຮູບທີ 6.2** ຮູບສະແດງອັດຕາສ່ວນປະເພດເຄື່ອງໄຟຟ້າ-ກົນຈັກ ທີ່ເກີນອາຍຸການນຳໃຊ້

ຮູບທີ 6.2 ສະແດງໃຫ້ເຫັນວ່າ ໃນປີ 2018 ມີເຖິງ 13 ລັດວິສາຫະກິດນ້ຳປະປາ ທີ່ອັດຕາສ່ວນປະເພດເຄື່ອງໄຟຟ້າ-ກົນຈັກ ທີ່ເກີນອາຍຸການນຳໃຊ້ ເຊິ່ງເພີ່ມຂຶ້ນຈາກປີ 2017 ເຖິງ 4 ລັດວິສາຫະກິດນ້ຳປະປາ. ສະນັ້ນ, ບັນດາລັດວິສາຫະກິດນ້ຳປະປາ ມີອັດຕາສ່ວນປະເພດເຄື່ອງໄຟຟ້າ-ກົນຈັກ ເກີນອາຍຸນຳໃຊ້ ຕ້ອງໄດ້ຮີບດ່ວນຂຶ້ນແຜນສ້ອມແປງ, ປ່ຽນຖ່າຍຮອງຮັບໄວ້ ເພື່ອຮັກສາສະຖຽນລະພາບ ການຜະລິດໃຫ້ຕໍ່ເນື່ອງ ຮັບປະກັນໄດ້ ປະລິມານທີ່ພຽງພໍ ກັບຄວາມຕ້ອງການຂອງຜູ້ບໍລິໂພກ (ລາຍລະອຽດອາຍຸການນຳໃຊ້ປະເພດ ເຄື່ອງຈັກ-ສິ່ງອຳນວຍຄວາມສະດວກນ້ຳປະປາ ເບິ່ງຕາຕະລາງ ທີ 6.2).

### 6.1.3 ອັດຕາສ່ວນສາຍທໍ່ທີ່ເກີນອາຍຸການນຳໃຊ້ (PI 2008)

ໃນການປະເມີນຜົນຕົວຊີ້ວັດ ອັດຕາສ່ວນສາຍທໍ່ທີ່ເກີນອາຍຸການນຳໃຊ້ ເພື່ອໃຫ້ຮູ້ໄດ້ຈຳນວນສາຍທໍ່ທີ່ເກີນອາຍຸ ການນຳໃຊ້, ເພາະລະບົບຕາຂ່າຍສາຍທໍ່ ແມ່ນມີຄວາມສຳຄັນຫຼາຍ ຕໍ່ກັບການຄວບຄຸມນ້ຳຮົ່ວໄຫຼ, ແຮງດັນນ້ຳ ແລະ ປະລິມານການແຈກຈ່າຍນ້ຳ ເພື່ອຮັກສາສະຖຽນລະພາບ ຂອງການສະໜອງນ້ຳປະປາ ໃຫ້ໄດ້ຢ່າງຕໍ່ເນື່ອງ.




**ຮູບທີ 6.3** ຮູບສະແດງອັດຕາສ່ວນສາຍທໍ່ທີ່ເກີນອາຍຸການນຳໃຊ້

ຮູບທີ 6.3 ສະແດງໃຫ້ເຫັນວ່າ ອັດຕາສ່ວນສາຍທໍ່ທີ່ເກີນອາຍຸການນຳໃຊ້ ມີ 4 ລັດວິສາຫະກິດໃນປີ 2017 ເຊິ່ງເພີ່ມຂຶ້ນເປັນ 6 ລັດວິສາຫະກິດ ໃນປີ 2018 ຄື: ນະຄອນຫຼວງວຽງຈັນ, ຫຼວງນ້ຳທາ, ບໍ່ແກ້ວ, ຫຼວງພະບາງ, ບໍລິຄຳໄຊ ແລະ ໄຊສົມບູນ; ສ່ວນອີກ 12 ລັດວິສາຫະກິດນ້ຳປະປາ ອັດຕາສ່ວນສາຍທໍ່ ແມ່ນບໍ່ເກີນອາຍຸການນຳໃຊ້ເທື່ອ ເນື່ອງຈາກວ່າ ບາງລັດວິສາຫະກິດນ້ຳປະປາແຂວງ ໄດ້ມີການສ້ອມແປງປ່ຽນຖ່າຍກ່ອນ ແລະ ບາງລັດວິສາຫະກິດນ້ຳປະປາແຂວງ ໄດ້ຮັບການກໍ່ສ້າງໃໝ່ ໃນບໍ່ດົນມານີ້ (ລາຍລະອຽດ ອາຍຸການໃຊ້ງານຂອງສາຍທໍ່ ເບິ່ງຕາຕະລາງທີ 6.4).

**ຕາຕະລາງ 6.2** ຕາຕະລາງສັງລວມອາຍຸການນຳໃຊ້ເຄື່ອງຈັກ-ສິ່ງອຳນວຍຄວາມສະດວກນ້ຳປະປາ

| ລ/ດ | ປະເພດເຄື່ອງຈັກ ແລະ ສິ່ງອຳນວຍຄວາມສະດວກ | ອາຍຸການໃຊ້ງານທີ່ກຳນົດ |
|---|---|---|
| 1 | ລະບົບໄຟຟ້າ | 10 ປີ |
| 2 | ເຄື່ອງຕອງ | 12 ປີ |
| 3 | ຈັກສູບສົ່ງນ້ຳ | 15 ປີ |
| 4 | ຈັກດູດນ້ຳ | 15 ປີ |
| 5 | ເຄື່ອງກວດກາສານເຄມີ<br>(ຄູ້ຣິນ, ແພັກ, ກວດ pH, ກວດຄວາມຂຸ່ນ) | 15 ປີ |
| 6 | ຈໍພາບຕິດຕາມ | 10 ປີ |
| 7 | ອຸປະກອນເຄື່ອງໃຊ້ | 10 ປີ |
| 8 | ເຄື່ອງຄວບຄຸມ | 10 ປີ |
| 9 | ເຄື່ອງເກັບຮັກສາສານເຄມີຢ່າງປອດໄພ | 15 ປີ |

**ຕາຕະລາງ 6.3** ຕາຕະລາງສັງລວມອາຍຸການນຳໃຊ້ສິ່ງປຸກສ້າງ (ໂຮງງານຜະລິດນ້ຳປະປາ)

| ລ/ດ | ປະເພດສິ່ງປຸກສ້າງ | ອາຍຸການໃຊ້ງານທີ່ກຳນົດ |
|---|---|---|
| 1 | ປະເພດສິ່ງປຸກສ້າງ ເພື່ອຮັບໃຊ້ອຸດສາຫະກຳ:<br>ມີອາຍຸແຕ່ 20 ປີ ລົງມາ<br>ມີອາຍຸແຕ່ 21-50 ປີ | <br>20 ປີ<br>50 ປີ |

ໝາຍເຫດ: ສຳລັບໂຮງງານຜະລິດນ້ຳປະປາ ແມ່ນຢູ່ໃນປະເພດສິ່ງປຸກສ້າງ ທີ່ມີອາຍຸ 21-50 ປີ

**ຕາຕະລາງ 6.4** ຕາຕະລາງສັງລວມອາຍຸການນຳໃຊ້ສາຍທໍ່

| ລ/ດ | ປະເພດສາຍທໍ່ | ອາຍຸການໃຊ້ງານທີ່ກຳນົດ |
|---|---|---|
| 1 | ປະເພດທໍ່ເຫຼັກ:<br>GSP<br>SP | <br>15 ປີ<br>25 ປີ |
| 2 | ປະເພດທໍ່ຂາງ: DIP | 40 ປີ |
| 3 | ປະເພດທໍ່ຢາງ:<br>PVC ແລະ uPVC<br>HDPE | <br>25 ປີ<br>40 ປີ |
| 4 | ປະເພດທໍ່ສາຍໃຍແກ້ວ (Fiber glass): GRP | 25 ປີ |
| 5 | ປະເພດທໍ່ອື່ນໆ | ອີງຕາມມາດຕະຖານຂອງທໍ່ດັ່ງກ່າວ |

## 6.2 **ອັດຕາສ່ວນປົກຄຸມພື້ນທີ່ບໍລິການ**

**ຕາຕະລາງ 6.5** ຕາຕະລາງສັງລວມຕົວຊີ້ວັດ PI 2001

| ລ/ດ | ລັດວິສາຫະກິດນ້ຳປະປາ | ອັດຕາສ່ວນປົກຄຸມພື້ນທີ່ບໍລິການ (%) | | ຈຳນວນປະຊາກອນ ປີ 2018 (ຄົນ) | |
|---|---|---|---|---|---|
| | | ປີ 2017 | ປີ 2018 | ໃນພື້ນທີ່ບໍລິການ | ໄດ້ຮັບບໍລິການ |
| 1 | ນະຄອນຫຼວງວຽງຈັນ | 71,68 | 74,97 | 808.362 | 606.036 |
| 2 | ແຂວງຜົ້ງສາລີ | 77,63 | 81,21 | 31.481 | 25.565 |
| 3 | ແຂວງຫຼວງນ້ຳທາ | 77,43 | 79,30 | 70.318 | 55.759 |
| 4 | ແຂວງອຸດົມໄຊ | 76,54 | 91,25 | 71.390 | 65.145 |
| 5 | ແຂວງບໍ່ແກ້ວ | 92,15 | 95,16 | 49.606 | 47.203 |
| 6 | ແຂວງຫຼວງພະບາງ | 88,77 | 86,41 | 131.099 | 113.277 |
| 7 | ແຂວງຫົວພັນ | 84,71 | 93,46 | 45.350 | 42.385 |
| 8 | ແຂວງໄຊຍະບູລີ | 67,06 | 65,31 | 131.554 | 85.920 |
| 9 | ແຂວງຊຽງຂວາງ | 64,45 | 61,73 | 66.217 | 40.874 |
| 10 | ແຂວງວຽງຈັນ | 61,64 | 65,34 | 129.334 | 84.504 |
| 11 | ແຂວງບໍລິຄຳໄຊ | 59,36 | 48,88 | 106.759 | 52.182 |
| 12 | ແຂວງຄຳມ່ວນ | 62,15 | 77,78 | 90.850 | 70.663 |
| 13 | ແຂວງສະຫວັນນະເຂດ | 55,81 | 59,78 | 278.623 | 166.550 |
| 14 | ແຂວງສາລະວັນ | 62,79 | 60,34 | 82.685 | 49.894 |
| 15 | ແຂວງເຊກອງ | 74,48 | 82,46 | 47.816 | 39.428 |
| 16 | ແຂວງຈຳປາສັກ | 57,72 | 60,38 | 186.911 | 112.864 |
| 17 | ແຂວງອັດຕະປື | 62,79 | 73,72 | 24.832 | 18.305 |
| 18 | ແຂວງໄຊສົມບູນ | 55,07 | 57,02 | 6.065 | 3.458 |
| **ສະເລ່ຍ** | | **69,57** | **71,21** | **2.359.252** | **1.680.012** |

ຈາກ ຕາຕະລາງ 6.5, ມາຮອດທ້າຍ ປີ 2018 ເຫັນວ່າ ການຂະຫຍາຍການບໍລິການ ຂອງລັດວິສາຫະກິດນ້ຳປະປາໃນຂອບເຂດທົ່ວປະເທດ ສາມາດເພີ່ມຈຳນວນປະຊາກອນ ໃຫ້ເຂົ້າເຖິງການບໍລິການນ້ຳປະປາ ໄດ້ທັງໝົດປະມານ 1.680.012 ຄົນ ຂອງຈຳນວນປະຊາກອນ ໃນພື້ນທີ່ບໍລິການທັງໝົດປະມານ 2.359.252 ຄົນ ເທົ່າກັບ 71,21% ເຊິ່ງເພີ່ມຂຶ້ນຈາກປີ 2017 (69,57%) ປະມານ 1,64%.




**ຮູບທີ 6.4** ຮູບສະແດງສັດສ່ວນອັດຕາການປົກຄຸມ ພື້ນທີ່ບໍລິການ ຂອງລັດວິສາຫະກິດນ້ຳປະປາ ປີ 2018

ຮູບທີ 6.4 ສະແດງໃຫ້ເຫັນວ່າ ຜົນການດຳເນີນງານ ດ້ານການເຂົ້າເຖິງການບໍລິການນ້ຳປະປາ ໃນປີ 2018 ເຫັນວ່າ ມີ 13 ລັດວິສາຫະກິດນ້ຳປະປາ ທີ່ອັດຕາສ່ວນປົກຄຸມພື້ນທີ່ການບໍລິການ ເພີ່ມຂຶ້ນ ແລະ ອີກ 5 ລັດວິສາຫະກິດນ້ຳປະປາ ແມ່ນຫຼຸດລົງ ເມື່ອທຽບໃສ່ປີ 2017 ເນື່ອງຈາກຈຳນວນປະຊາກອນເພີ່ມຂຶ້ນ ແຕ່ໂຮງງານຜະລິດນ້ຳປະປາ ບໍ່ໄດ້ຮັບການຂະຫຍາຍ ແລະ ໃນນັ້ນ ມີ 6 ລັດວິສາຫະກິດນ້ຳປະປາ ທີ່ອັດຕາສ່ວນປົກຄຸມພື້ນທີ່ການບໍລິການ ເພີ່ມຂຶ້ນເກີນເປົ້າໝາຍທີ່ວາງໄວ້ 80% ຂອງປີ 2020. ເຖິງຢ່າງໃດກໍ່ຕາມ, 8 ລັດວິສາຫະກິດນ້ຳປະປາ ທີ່ບໍ່ສາມາດບັນລຸໄດ້ຮອດ 70% ແລະ ໃນນັ້ນກໍ່ມີ 3 ລັດວິສາຫະກິດນ້ຳປະປາ ຕ່ຳກວ່າ 60% ໂດຍສະເພາະແມ່ນລັດວິສາຫະກິດນ້ຳປະປາ ແຂວງບໍລິຄຳໄຊ ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເພາະມາຮອດປີ 2018 ນີ້ ເພິ່ນສາມາດບັນລຸໄດ້ພຽງແຕ່ 48,88% ເທົ່ານັ້ນ ເນື່ອງຈາກວ່າໄດ້ມີການຂະຫຍາຍພື້ນທີ່ບໍລິການອອກໄປຕື່ມ ແຕ່ວ່າລະບົບໂຄງລ່າງນ້ຳປະປາ ບໍ່ສາມາດຄອບຄຸມພື້ນທີ່ບໍລິການໄດ້ທົ່ວເຖິງ.

## 6.3 ການຄຸ້ມຄອງນໍ້າບໍ່ສ້າງລາຍຮັບ

**ຕາຕະລາງ 6.6** ຕາຕະລາງສັງລວມຕົວຊີ້ວັດ PI 2005

| ລ/ດ | ລັດວິສາຫະກິດນໍ້າປະປາ | ອັດຕາສ່ວນນໍ້າບໍ່ສ້າງລາຍຮັບ(%) | |
|---|---|---|---|
| | | 2017 | 2018 |
| 1 | ນະຄອນຫຼວງວຽງຈັນ | 32,76 | 33,24 |
| 2 | ແຂວງຜົ້ງສາລີ | 31,41 | 43,93 |
| 3 | ແຂວງຫຼວງນໍ້າທາ | 20,57 | 20,40 |
| 4 | ແຂວງອຸດົມໄຊ | 35,34 | 34,69 |
| 5 | ແຂວງບໍ່ແກ້ວ | 33,21 | 30,71 |
| 6 | ແຂວງຫຼວງພະບາງ | 24,61 | 26,00 |
| 7 | ແຂວງຫົວພັນ | 34,56 | 34,00 |
| 8 | ແຂວງໄຊຍະບູລີ | 23,31 | 28,16 |
| 9 | ແຂວງຊຽງຂວາງ | 44,36 | 46,00 |
| 10 | ແຂວງວຽງຈັນ | 22,02 | 22,01 |
| 11 | ແຂວງບໍລິຄຳໄຊ | 25,91 | 23,10 |
| 12 | ແຂວງຄຳມ່ວນ | 22,37 | 25,37 |
| 13 | ແຂວງສະຫວັນນະເຂດ | 24,76 | 23,13 |
| 14 | ແຂວງສາລະວັນ | 18,05 | 21,87 |
| 15 | ແຂວງເຊກອງ | 26,08 | 25,15 |
| 16 | ແຂວງຈຳປາສັກ | 46,16 | 35,33 |
| 17 | ແຂວງອັດຕະປື | 24,00 | 25,35 |
| 18 | ແຂວງໄຊສົມບູນ | 27,11 | 17,43 |
| **ສະເລ່ຍ** | | **28,70** | **28,66** |

ໃນການຄວບຄຸມນໍ້າບໍ່ສ້າງລາຍຮັບ ເພື່ອຮັບປະກັນໄດ້ປະສິດທິຜົນ ຂອງການດຳເນີນງານດ້ານການຜະລິດ ແລະ ການຈຳໜ່າຍ, ເປົ້າໝາຍທຳອິດ ໃນການຄຸ້ມຄອງນໍ້າບໍ່ສ້າງລາຍຮັບ ໄດ້ກຳນົດໃນອັດຕາສ່ວນບໍ່ໃຫ້ສູງເກີນ 25%.

**ຕາຕະລາງ 6.7** ຮູບສະແດງອົງປະກອບຄວາມສົມດູນຂອງນ້ຳ ທີ່ສະມາຄົມນ້ຳສາກົນ (IWA)

| | | | | |
|---|---|---|---|---|
| ບໍລິມາດ ນ້ຳປະປາ ສົ່ງອອກ ຈາກ ໂຮງງານເຂົ້າ ສູ່ ລະບົບ ແຈກຈ່າຍ | ນ້ຳໃຊ້ ໂດຍໄດ້ຮັບ ອະນຸຍາດ | ນ້ຳທີ່ອະນຸຍາດໃຫ້ໃຊ້ ໂດຍເກັບເງິນ | ນ້ຳທີ່ຜ່ານໝໍ້ແທກນ້ຳ ແລະ ເກັບເງິນ | ນ້ຳທີ່ສ້າງລາຍຮັບ |
| | | | ນ້ຳທີ່ບໍ່ຜ່ານໝໍ້ແທກນ້ຳ ແຕ່ເກັບເງິນ | |
| | | ນ້ຳທີ່ອະນຸຍາດໃຫ້ໃຊ້ ແຕ່ບໍ່ເກັບເງິນ | ນ້ຳທີ່ຜ່ານໝໍ້ແທກນ້ຳ ແຕ່ບໍ່ເກັບເງິນ | ນ້ຳທີ່ບໍ່ສ້າງລາຍຮັບ |
| | | | ນ້ຳທີ່ບໍ່ຜ່ານໝໍ້ແທກນ້ຳ ແລະ ບໍ່ເກັບເງິນ | |
| | ນ້ຳສູນເສຍ | ນ້ຳສູນເສຍ ທາງການຄ້າ | ນ້ຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດ (ລັກໃຊ້) | |
| | | | ຄວາມບໍ່ຖືກຕ້ອງຂອງໝໍ້ແທກນ້ຳລູກຄ້າ<br>ຄວາມຜິດພາດໃນການຈັດການຂໍ້ມູນ | |
| | | ນ້ຳສູນເສຍ ທາງກາຍະພາບ | ນ້ຳຮົ່ວໄຫຼຢູ່ທໍ່ສົ່ງ ແລະ ທໍ່ແຈກຈ່າຍນ້ຳປະປາ | |
| | | | ນ້ຳຮົ່ວໄຫຼ ແລະ ລົ້ນອ່າງເກັບນ້ຳ | |
| | | | ນ້ຳຮົ່ວໄຫຼຢູ່ທໍ່ບໍລິການຈົນຮອດໝໍ້ແທກນ້ຳລູກຄ້າ | |

ຕາຕະລາງ 6.7 ສະແດງເຖິງອົງປະກອບຂອງຄວາມສົມດູນຂອງນ້ຳ ທີ່ສະມາຄົມນ້ຳສາກົນ (IWA) ໄດ້ສະແດງເຖິງວົງຈອນຄວາມສົມດຸນນ້ຳ ແລະ ໄດ້ອະທິບາຍຢ່າງຈະແຈ້ງ ກ່ຽວກັບ ສັດສ່ວນຂອງນ້ຳບໍ່ສ້າງລາຍຮັບ ແມ່ນມາຈາກໃສ? ເລີ່ມແຕ່ຂອດການຜະລິດຈົນຮອດການຈຳໜ່າຍ. ນ້ຳບໍ່ສ້າງລາຍຮັບລວມມີນ້ຳ ທີ່ອະນຸຍາດໃຫ້ໃຊ້ແຕ່ບໍ່ເກັບເງິນ, ນ້ຳສູນເສຍທາງການຄ້າ ແລະ ນ້ຳສູນເສຍທາງກາຍະພາບ.




**ຮູບທີ 6.5** ຮູບສະແດງອັດຕາສ່ວນນ້ຳບໍ່ສ້າງລາຍຮັບ

ຜົນການດຳເນີນງານດ້ານອັດຕາສ່ວນນ້ຳບໍ່ສ້າງລາຍຮັບ ຂອງລັດວິສາຫະກິດນ້ຳປະປາ ໃນຂອບ

ເຂດທົ່ວປະເທດ ປີ 2018 ເຫັນວ່າ ສາມາດຄວບຄຸມໄດ້ພຽງ 28,66% ທຽບໃສ່ປີ 2017 (28.70%) ແມ່ນເຫັນວ່າ ຫຼຸດລົງພຽງເລັກໜ້ອຍ ປະມານ 0.04%; ເຖິງຈະເປັນຕົວເລກທີ່ເກືອບບໍ່ແຕກຕ່າງ ແຕ່ກໍ່ສະແດງ ເຖິງຄວາມອາດສາມາດໃນການຄວບຄຸມນ້ຳບໍ່ສ້າງລາຍຮັບ ບໍ່ໃຫ້ເພີ່ມຂຶ້ນໄດ້ໃນລະດັບເທົ່າເດີມ.

ຮູບທີ 6.5 ໄດ້ສະແດງໃຫ້ເຫັນວ່າ ໃນປີ 2018 ມີ 10 ລັດວິສາຫະກິດນ້ຳປະປາ ທີ່ຄວບຄຸມນ້ຳບໍ່ສ້າງລາຍຮັບ ໄດ້ຕ່ຳກວ່າປີ 2017 ຄື: ແຂວງຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫົວພັນ, ວຽງຈັນ, ບໍລິຄຳໄຊ, ສະຫວັນນະເຂດ, ເຊກອງ, ຈຳປາສັກ ແລະ ໄຊສົມບູນ; ສ່ວນອີກ 8 ລັດວິສາຫະກິດນ້ຳປະປາ ທີ່ເຫຼືອແມ່ນບໍ່ສາມາດຄວບຄຸມໄດ້ໃນລະດັບຕ່ຳລົງ ຫຼື ເທົ່າເດີມ. ໃນປີ 2018 ນີ້ ທັງໝົດ 18 ລັດວິສາຫະກິດນ້ຳປະປາ ມີພຽງ 6 ລັດວິສາຫະກິດ ທີ່ອັດຕາສ່ວນນ້ຳບໍ່ສ້າງລາຍຮັບ ຕ່ຳກວ່າຄາດໝາຍ 25% ຄື: ແຂວງຫຼວງນ້ຳທາ, ວຽງຈັນ, ບໍລິຄຳໄຊ, ສະຫວັນນະເຂດ, ສາລະວັນ ແລະ ໄຊສົມບູນ; 5 ລັດວິສາຫະກິດ ມີອັດຕາສ່ວນຢູ່ໃນ ລະຫວ່າງ 25-30% ຄື: ແຂວງຫຼວງພະບາງ, ໄຊຍະບູລີ, ຄຳມ່ວນ, ເຊກອງ ແລະ ອັດຕະປື; ສ່ວນອີກ 7 ລັດວິສາຫະກິດ ມີອັດຕາສ່ວນສູງເກີນ 30% ຄື: ນະຄອນຫຼວງວຽງຈັນ, ຜົ້ງສາລີ, ອຸດົມໄຊ, ບໍ່ແກ້ວ, ຫົວພັນ, ຊຽງຂວາງ ແລະ ຈຳປາສັກ ໂດຍສະເພາະ ແມ່ນລັດວິສາຫະກິດ ນ້ຳປະປາ ແຂວງຜົ້ງສາລີ ແລະ ຊຽງຂວາງ ທີ່ອັດຕາສ່ວນສູງເກີນ 40%.

ສັງລວມແລ້ວ ຜົນການຈັດຕັ້ງປະຕິບັດງານໂດຍລວມ ດ້ານການຄວບຄຸມນ້ຳບໍ່ສ້າງລາຍຮັບ ສະເລ່ຍທົ່ວປະເທດ ຍັງບໍ່ສາມາດບັນລຸໄດ້ເປົ້າໝາຍທີ່ໄດ້ກຳນົດ ໃນອັດຕາສ່ວນບໍ່ໃຫ້ສູງເກີນ 25%, ເນື່ອງຈາກວ່າ ການທີ່ຈະຫຼຸດອັດຕາສ່ວນນ້ຳບໍ່ສ້າງລາຍຮັບ ຕາມຄາດໝາຍທີ່ວາງໄວ້ 1% ຕໍ່ປີ ຕ້ອງໃຊ້ ທຶນສູງ, ແຮງງານ ແລະ ອຸປະກອນກົນຈັກ ຈຳນວນຫຼາຍສົມຄວນ.

## 6.4 ຕົວຊີ້ວັດການຕິດຕາມ-ປະເມີນຜົນ ການເກັບລາຍຮັບຄ່ານໍ້າປະປາ ປີ 2018

**ຕາຕະລາງ 6.8** ຕາຕະລາງສັງລວມຕົວຊີ້ວັດ PI 3002, PI 3003

| ລ/ດ | ລັດວິສາຫະກິດນໍ້າປະປາ | ອັດຕາສ່ວນໃບເກັບເງິນຄ່ານໍ້າ ທີ່ຍັງບໍ່ໄດ້ຈ່າຍ (%) | | ອັດຕາສ່ວນເງິນຄ່ານໍ້າ ທີ່ຍັງບໍ່ໄດ້ຈ່າຍ (%) | |
|---|---|---|---|---|---|
| | | 2017 | 2018 | 2017 | 2018 |
| 1 | ນະຄອນຫຼວງວຽງຈັນ | 1,68 | 5,13 | 17,00 | 11,00 |
| 2 | ແຂວງຜົ້ງສາລີ | 3,00 | 2,00 | 5,00 | 9,00 |
| 3 | ແຂວງຫຼວງນໍ້າທາ | 0,34 | 0,45 | 2,26 | 2,32 |
| 4 | ແຂວງອຸດົມໄຊ | 3,81 | 2,42 | 9,35 | 1,13 |
| 5 | ແຂວງບໍ່ແກ້ວ | 2,00 | 1,10 | 5,50 | 4,70 |
| 6 | ແຂວງຫຼວງພະບາງ | 3,00 | 3,00 | 13,28 | 14,00 |
| 7 | ແຂວງຫົວພັນ | 0,20 | 0,17 | 0,72 | 0,88 |
| 8 | ແຂວງໄຊຍະບູລີ | 1,18 | 2,00 | 18,00 | 18,00 |
| 9 | ແຂວງຊຽງຂວາງ | 15,00 | 14,00 | 35,00 | 39,15 |
| 10 | ແຂວງວຽງຈັນ | 1,75 | 1,92 | 32,70 | 28,33 |
| 11 | ແຂວງບໍລິຄໍາໄຊ | 1,28 | 0,74 | 4,12 | 4,12 |
| 12 | ແຂວງຄໍາມ່ວນ | 3,00 | 3,00 | 10,00 | 6,00 |
| 13 | ແຂວງສະຫວັນນະເຂດ | 79,00 | 81,00 | 22,00 | 21,00 |
| 14 | ແຂວງສາລະວັນ | 2,00 | 19,00 | 20,00 | 9,00 |
| 15 | ແຂວງເຊກອງ | 13,00 | 0,90 | 15,28 | 11,00 |
| 16 | ແຂວງຈໍາປາສັກ | 1,13 | 1,07 | 64,70 | 65,00 |
| 17 | ແຂວງອັດຕະປື | 68,00 | 68,00 | 150,00 | 180,00 |
| 18 | ແຂວງໄຊສົມບູນ | 90,00 | 92,00 | 35,80 | 37,00 |
| **ສະເລ່ຍ** | | **16,07** | **16,55** | **25,59** | **26,31** |

### 6.4.1 ອັດຕາສ່ວນໃບເກັບເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ




**ຮູບທີ 6.6** ສະແດງອັດຕາສ່ວນໃບເກັບເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ

ຜົນການດຳເນີນງານ ດ້ານອັດຕາສ່ວນໃບເກັບເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ ຈາກລູກຄ້າ ໃນປີ 2018 ສະເລ່ຍ 16,55% ທຽບໃສ່ ປີ 2017 (16.07%) ແມ່ນເພີ່ມຂຶ້ນປະມານ 0.48%. ຈາກຮູບທີ 6.6 ສະແດງໃຫ້ເຫັນວ່າ ມີ 8 ລັດວິສາຫະກິດ ທີ່ອັດຕາສ່ວນໃບເກັບເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ ຫຼຸດລົງຈາກປີທີ່ຜ່ານມາ ຄື: ແຂວງຜົ້ງສາລີ, ອຸດົມໄຊ, ບໍ່ແກ້ວ, ຫົວພັນ, ຊຽງຂວາງ, ບໍລິຄຳໄຊ, ເຊກອງ ແລະ ຈຳປາສັກ; ມີ 3 ລັດວິສາຫະກິດທີ່ອັດຕາສ່ວນເທົ່າເດີມ ຄື: ແຂວງຫຼວງພະບາງ, ຄຳມ່ວນ ແລະ ອັດຕະປື; ສ່ວນອີກ 7 ລັດວິສາຫະກິດ ທີ່ເຫຼືອ ເຫັນວ່າ ອັດຕາສ່ວນໃບເກັບເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ ເພີ່ມຂຶ້ນຈາກປີຜ່ານມາ ຄື: ນະຄອນຫຼວງວຽງຈັນ, ຫຼວງນ້ຳທາ, ໄຊຍະບູລີ, ວຽງຈັນ, ສະຫວັນນະເຂດ, ສາລະວັນ ແລະ ໄຊສົມບູນ.

ສັງລວມແລ້ວ ໃນ 18 ລັດວິສາຫະກິດນ້ຳປະປາທົ່ວປະເທດ ເຖິງແມ່ນວ່າອັດຕາສ່ວນໃບເກັບເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ ຈາກລູກຄ້າ ຈະເພີ່ມຂຶ້ນກໍ່ຕາມ ແຕ່ອັດຕາສ່ວນເພີ່ມຂຶ້ນ ສະເລ່ຍຕ່ຳກວ່າ 20% ເຖິງ 15 ແຂວງ, ສະນັ້ນ ຈຶ່ງເວົ້າໄດ້ວ່າ ຜົນການດຳເນີນ ດ້ານໃບເກັບເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ ຈາກລູກຄ້າ ໂດຍລວມແມ່ນເຮັດໄດ້ດີຫຼາຍ. ສ່ວນອີກ 3 ລັດວິສາຫະກິດຄື: ແຂວງສະຫວັນນະເຂດ, ອັດຕະປື ແລະ ໄຊສົມບູນ ແມ່ນມີອັດຕາສ່ວນສູງເກີນເຄິ່ງໜຶ່ງ ຂອງ ຈຳນວນໃບເກັບເງິນຄ່ານ້ຳທີ່ແຈກຈ່າຍໃຫ້ ລູກຄ້າ ເຊິ່ງເປັນສາເຫດຫຼັກ ທີ່ເຮັດໃຫ້ບັນດາລັດວິສາຫະກິດນ້ຳປະປາ ບໍ່ມີສະພາບຄ່ອງທາງດ້ານການເງິນ.

### 6.4.2 ອັດຕາສ່ວນເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ




**ຮູບທີ 6.7** ສະແດງອັດຕາສ່ວນເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ ຂອງລັດວິສາຫະກິດນ້ຳປະປາ

ຮູບທີ 6.7 ສະແດງໃຫ້ເຫັນເຖິງຕົວຊີ້ວັດອັດຕາສ່ວນເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ ຈາກລູກຄ້າ ຂອງ ລັດວິສາຫະກິດນ້ຳປະປາ 25.59% ໃນປີ 2017 ທຽບໃສ່ 2018 ເພີ່ມຂຶ້ນເປັນ 26.31%, ຄິດໄລ່ຄວາມແຕກຕ່າງປະມານ 0.72%. ສຳລັບ 9 ລັດວິສາຫະກິດ ຄື: ນະຄອນຫຼວງວຽງຈັນ, ແຂວງຫຼວງນ້ຳທາ, ບໍ່ແກ້ວ, ວຽງຈັນ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ໄຊຍະບູລີ ແມ່ນຮັກສາໄດ້ອັດຕາສ່ວນເທົ່າເດີມ 18% ແລະ ອີກ 9 ລັດວິສາຫະກິດທີ່ເຫຼືອ ແມ່ນມີອັດຕາສ່ວນເພີ່ມຂຶ້ນຈາກປີທີ່ຜ່ານມາ.

ເຖິງແມ່ນວ່າຕົວເລກຕົວຊີ້ວັດສະເລ່ຍໂດຍລວມ ຈະກວມອັດຕາສ່ວນສູງເກີນ 25% ກໍ່ຕາມ ແຕ່ຍັງມີ 13 ລັດວິສາຫະກິດ ທີ່ອັດຕາສ່ວນຕ່ຳກວ່າ 25% ທີ່ສະແດງເຖິງປະສິດທິພາບ ຂອງ ການເກັບເງິນ ຄ່ານ້ຳ ຂອງບັນດາລັດວິສາຫະກິດ ທີ່ເຮັດໄດ້ດີ. ສ່ວນ 5 ລັດວິສາຫະກິດ ທີ່ອັດຕາສ່ວນເງິນຄ່ານ້ຳ ທີ່ຍັງບໍ່ທັນໄດ້ຈ່າຍຈາກລູກຄ້າສູງນັ້ນ ສ່ວນໃຫຍ່ກໍ່ເປັນໜີ້ສິນຄຸມເຄືອມາຫຼາຍປີ, ໂດຍສະເພາະ ປະເພດສຳນັກງານຫ້ອງການລັດເປັນສ່ວນໃຫຍ່ ທີ່ເຮັດໃຫ້ກວມອັດຕາສ່ວນສູງ ເຊິ່ງອາດເປັນສາເຫດ ເຮັດໃຫ້ຂາດສະພາບຄ່ອງທາງການເງິນ.

## 6.5 **ການວິເຄາະຕົ້ນທຶນ**

**ຕາຕະລາງ 6.9** ສັງລວມຕົວຊີ້ວັດ PI 3006, PI 3007

| ລ/ດ | ລັດວິສາຫະກິດນ້ຳປະປາ | ລາຄາຕົ້ນທຶນ (ກີບ/ມ$^3$) | | ລາຄາຫົວໜ່ວຍນ້ຳຂາຍ (ກີບ/ມ$^3$) | | ກຳໄລ/ ຂາດທຶນ ປີ 2018 |
|---|---|---|---|---|---|---|
| | | 2017 | 2018 | 2017 | 2018 | |
| 1 | ນະຄອນຫຼວງວຽງຈັນ | 2.275 | 2.578 | 2.281 | 2.289 | - 289 |
| 2 | ແຂວງຜົ້ງສາລີ | 3.981 | 4.578 | 3.847 | 3.857 | - 721 |
| 3 | ແຂວງຫຼວງນ້ຳທາ | 4.799 | 4.955 | 3.321 | 4.335 | -620 |
| 4 | ແຂວງອຸດົມໄຊ | 4,463 | 4.631 | 4.560 | 4.534 | - 97 |
| 5 | ແຂວງບໍ່ແກ້ວ | 3.336 | 4.074 | 4.649 | 4.713 | 639 |
| 6 | ແຂວງຫຼວງພະບາງ | 3.550 | 3.632 | 3.299 | 3.217 | -415 |
| 7 | ແຂວງຫົວພັນ | 10.394 | 10.814 | 4,855 | 4.852 | -5.962 |
| 8 | ແຂວງໄຊຍະບູລີ | 3.777 | 3.950 | 3.811 | 3.802 | -148 |
| 9 | ແຂວງຊຽງຂວາງ | 4.688 | 4.485 | 4.701 | 4.719 | 234 |
| 10 | ແຂວງວຽງຈັນ | 3.614 | 3.509 | 3.807 | 3.824 | 315 |
| 11 | ແຂວງບໍລິຄຳໄຊ | 5.238 | 4,953 | 4.166 | 4.543 | -410 |
| 12 | ແຂວງຄຳມ່ວນ | 4.315 | 7.526 | 3.089 | 3.093 | -4.433 |
| 13 | ແຂວງສະຫວັນນະເຂດ | 4.504 | 6.088 | 3.549 | 3.039 | -3.049 |
| 14 | ແຂວງສາລະວັນ | 4.892 | 5.095 | 4.214 | 3.817 | -1.278 |
| 15 | ແຂວງເຊກອງ | 4.457 | 4.757 | 3.637 | 3.618 | -1.139 |
| 16 | ແຂວງຈຳປາສັກ | 5.099 | 4.607 | 4.321 | 4.299 | -308 |
| 17 | ແຂວງອັດຕະປື | 5.135 | 5.617 | 4.689 | 4.623 | -994 |
| 18 | ແຂວງໄຊສົມບູນ | 5.113 | 5.237 | 2.281 | 4.085 | -1.152 |
| **ສະເລ່ຍ** | | **4.646** | **5.060** | **3.838** | **3.959** | **-1.102** |

### 6.5.1 ລາຄາຕົ້ນທຶນ




**ຮູບທີ 6.8** ສະແດງລາຄາຕົ້ນທຶນການດໍາເນີນງານ ຂອງລັດວິສາຫະກິດນໍ້າປະປາ

ຮູບທີ 6.8 ສະແດງໃຫ້ເຫັນດ້ານລາຄາຫົວໜ່ວຍຕົ້ນທຶນ ການຜະລິດນໍ້າຕໍ່ໜຶ່ງແມັດກ້ອນ ເພື່ອໃຫ້ສາ ມາດປະເມີນລາຄາຂາຍນໍ້າໄດ້ ແລະ ພ້ອມກັນນັ້ນກໍເປັນການຄວບຄຸມຕົ້ນທຶນໄປໃນຕົວ, ເຊິ່ງຜົນການດໍາ ເນີນງານ ໃນປີ 2018 ເຫັນວ່າ ລາຄາຕົ້ນທຶນຫົວໜ່ວຍເພີ່ມຂຶ້ນ ເປັນ 5.060 ກີບ/ມ$^3$ ທຽບໃສ່ປີ 2017 ທີ່ມີລາຄາຕົ້ນທຶນ 4.466 ກີບ/ມ$^3$ ໂດຍສະເລ່ຍແມ່ນ 414 ກີບ/ມ$^3$ ເທົ່າກັບ 9%. ໃນນັ້ນມີ 5 ລັດວິສາ ຫະກິດ ທີ່ສາມາດຄວບຄຸມຕົ້ນທຶນການຜະລິດນໍ້າໄດ້ ຄື: ແຂວງອຸດົມໄຊ, ວຽງຈັນ, ຊຽງຂວາງ, ບໍລິຄໍາໄຊ ແລະ ຈໍາປາສັກ, ສ່ວນອີກ 13 ລັດວິສາຫະກິດທີ່ເຫຼືອ ລາຄາຕົ້ນທຶນແມ່ນເພີ່ມຂຶ້ນສະເລ່ຍປະມານ 14%.

ສະເພາະລາຄາຕົ້ນທຶນການຜະລິດນໍ້າປະປາ ຂອງລັດວິສາຫະກິດໃນຂອບເຂດທົ່ວປະເທດ ໃນປີ 2018 ນີ້ ມີ 6 ລັດວິສາຫະກິດ ທີ່ຕົ້ນທຶນສູງກວ່າຄ່າສະເລ່ຍ 5.060 ກີບ/ມ$^3$, ໃນນັ້ນ ລັດວິສາຫະກິດນໍ້າປະປາ ແຂວງຫົວພັນ ສູງເຖິງ 10.814 ກີບ/ມ$^3$, ຄໍາມ່ວນ 7.526 ກີບ/ມ$^3$ ແລະ ສະຫວັນນະເຂດ 6.088 ກີບ/ມ$^3$; ຖັດມາແມ່ນ ລັດວິສາຫະກິດນໍ້າປະປາ ແຂວງສາລະວັນ, ອັດຕະປື ແລະ ໄຊສົມບູນ ສະເລ່ຍ ປະມານ 5.316 ກີບ/ມ$^3$; ສ່ວນອີກ 12 ລັດວິສາຫະກິດທີ່ເຫຼືອ ແມ່ນຕໍ່າກວ່າຄ່າສະເລ່ຍ ເຊິ່ງໃນນີ້ມີພຽງລັດວິສາຫະກິດນໍ້າປະປາ ນະຄອນຫຼວງວຽງຈັນ ທີ່ລາຄາຕົ້ນທຶນຕໍ່າກວ່າ 1,5 ເທົ່າ ຂອງລາຄາຕົ້ນທຶນສະເລ່ຍທົ່ວປະເທດ.

ສັງລວມແລ້ວ ດ້ານຕົ້ນທຶນການດໍາເນີນງານໂດຍສະເລ່ຍ ເຫັນວ່າບັນດາລັດວິສາຫະກິດນໍ້າປະປາແມ່ນບໍ່ສາມາດຄວບຄຸມໄດ້ ໃນອັດຕາທີ່ເໝາະສົມ ຍົກເວັ້ນລັດວິສາຫະກິດນໍ້າປະປານະຄອນຫຼວງວຽງຈັນ; ໃນນາມຜູ້ຄຸ້ມຄອງຂັ້ນມະຫາພາກວຽກງານນໍ້າປະປາ, ກົມນໍ້າປະປາ ກໍ່ມີຄວາມເປັນຫ່ວງນໍາ; ເພື່ອແກ້ໄຂ

ບັນຫາເຫຼົ່ານັ້ນ ຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າ ລົງເລິກດ້ານຄ່າໃຊ້ຈ່າຍ ໃນການດຳເນີນງານເໝາະສົມ ເພື່ອຫຼີກລ້ຽງຜົນກະທົບດ້ານການເງິນທີ່ຈະຕາມມາ ສິ່ງຜົນໃຫ້ຂາດຄວາມເຊື່ອໝັ້ນ ໃນການດຳເນີນທຸລະກິດ.

### 6.5.2 ລາຄາທົວໜ່ວຍນ້ຳຂາຍ




**ຮູບທີ 6.9** ລາຄາທົວໜ່ວຍນ້ຳຂາຍ ຂອງລັດວິສາຫະກິດນ້ຳປະປາ

ຮູບທີ 6.9 ສະແດງໃຫ້ເຫັນວ່າ ຕົວຊີ້ວັດ ທີ່ບອກເຖິງປະສິດທິພາບຂອງການສ້າງລາຍຮັບ ທາງກົງ ທີ່ເປັນຜະລິດຕະພັນຫຼັກ ຂອງຜູ້ດຳເນີນທຸລະກິດນ້ຳປະປາ, ສາມາດຕີລາຄາໄດ້ ເຖິງຄວາມຍືນຍົງດ້ານ ການເງິນຂອງທຸລະກິດ. ຜົນການຈັດຕັ້ງປະຕິບັດລາຄາທົວໜ່ວຍນ້ຳຂາຍ ໃນປີ 2018 ແມ່ນ 3.959 ກີບ/ມ$^3$ ສະເລ່ຍເພີ່ມຂຶ້ນ 121 ກີບ/ມ$^3$ ທຽບໃສ່ ປີ 2017 (3.838 ກີບ/ມ$^3$). ໃນນັ້ນ ມີ 9 ລັດວິສາຫະກິດ ທີ່ລາຄາຂາຍນ້ຳເພີ່ມຂຶ້ນ ແລະ 9 ລັດວິສາຫະກິດ ລາຄາຫຼຸດລົງຈາກປີທີ່ຜ່ານມາ; ໃນ 9 ລັດວິສາຫະກິດ ທີ່ລາຄາຂາຍນ້ຳເພີ່ມຂຶ້ນນັ້ນ ແມ່ນລວມເອົາລັດວິສາຫະກິດນ້ຳປະປາ ແຂວງໄຊສົມບູນ ທີ່ລາຄາຂາຍເພີ່ມຂຶ້ນ ຈາກປີທີ່ຜ່ານມາເກີນ 1,5 ເທົ່າ ຄື: 2.281 ກີບ/ມ$^3$ ໃນປີ 2017 ເປັນ 4.085 ກີບ/ມ$^3$ ໃນປີ 2018 ແລະ ແຂວງຫຼວງນ້ຳທາເກີນ 1,2 ເທົ່າ, ສ່ວນແຂວງທີ່ເຫຼືອ ອັດຕາສ່ວນທີ່ເພີ່ມຂຶ້ນ ຫຼື ຫຼຸດລົງ ແມ່ນບໍ່ເກີນ 5%.

ເນື່ອງຈາກວ່າ ການກຳນົດດ້ານລາຄາຂາຍນ້ຳປະປາ ບັນດາລັດວິສາຫະກິດນ້ຳປະປາ ໄດ້ນຳໃຊ້ເຂົ້າ ໃນການຄິດໄລ່ ແມ່ນເພິ່ນໄດ້ກຳນົດເປັນກຳໄລຕາມກຳນົດໝາຍ ຫຼັງຄິດໄລ່ຕົ້ນທຶນລາຍຈ່າຍທັງໝົດ ປະມານ 5% ຫຼື ໃຫຍ່ກວ່າອັດຕາດອກເບ້ຍຕົ້ນທຶນເງິນກູ້ຢືມ ແລະ ລາຍຈ່າຍການເງິນ ບົນພື້ນຖານທຸລະກິດ ຢູ່ໃນການຄວບຄຸມຂອງລັດຖະບານ (ທຸລະກິດຄວບຄຸມ); ຄຽງຄູ່ກັນນັ້ນນະໂຍບາຍລາຄານ້ຳປະປາ ທີ່ ກະຊວງ ໂຍທາທິການ ແລະ ຂົນສົ່ງ ໄດ້ກຳນົດໄວ້ເປັນເພດານ ປະມານ 3-5% ຂອງລາຍຮັບຄົວເຮືອນ ເພື່ອຫຼີກລ້ຽງຜົນກະທົບດ້ານລາຍຈ່າຍຄ່ານ້ຳປະປາ ຂອງລູກຄ້າປະເພດຄົວເຮືອນທີ່ມີລາຍຮັບຕ່ຳ.

ສະຫຼຸບແລ້ວ ຖ້າສົມທຽບດ້ານລາຄາຕົ້ນທຶນການຜະລິດນ້ຳ (PI 3006) ແລະ ລາຄາທົວໜ່ວຍນ້ຳຂາຍ (PI 3007) ໂດຍລວມຈະເຫັນວ່າມີການຂາດທຶນສະເລ່ຍ -1.102 ກີບ/$ມ^3$ ເທົ່າກັບອັດຕາສ່ວນ 20%, ເຊິ່ງຕົວຊີ້ວັດ 2 ຕົວນີ້ ໄດ້ສະແດງເຖິງປະສິດທິພາບ ຂອງການດຳເນີນທຸລະກິດ ແມ່ນບໍ່ສາມາດມີກຳໄລ ຈາກການຂາຍນ້ຳໄດ້ ຫຼື ຖ້າຈະມີກຳໄລ ກໍ່ຕ້ອງໄດ້ອາໄສລາຍຮັບທາງອ້ອມ ເປັນຕົ້ນແມ່ນ ລາຍຮັບຄ່າຕິດຕັ້ງໝໍ້ແທກນ້ຳເຂົ້າບ້ານ, ຄ່າສ້ອມແປງພາຍນອກ, ຄ່າເຊົ່າໝໍ້ແທກນ້ຳ ແລະ ຄ່າບໍລິການອື່ນໆ.

### 6.6 **ການວິເຄາະບຸກຄະລາກອນ**

**ຕາຕະລາງ 6.10** ສັງລວມຕົວຊີ້ວັດ PI 3008, PI 3013

| ລ/ດ | ລັດວິສາຫະກິດນ້ຳປະປາ | ລາຍຮັບຈາກການຂາຍນ້ຳ ຕໍ່ພະນັກງານໜຶ່ງຄົນ (ກີບ) | | ປະລິມານນ້ຳທີ່ສົ່ງອອກ ຕໍ່ພະນັກງານໜຶ່ງຄົນ ($ມ^3$) | |
|---|---|---|---|---|---|
| | | 2017 | 2018 | 2017 | 2018 |
| 1 | ນະຄອນຫຼວງວຽງຈັນ | 236.501.849 | 281.355.654 | 153.795 | 103.689 |
| 2 | ແຂວງຜົ້ງສາລີ | 51.614,262 | 52.803.796 | 19.141 | 24.382 |
| 3 | ແຂວງຫຼວງນ້ຳທາ | 65.268.394 | 83.231.071 | 19.654 | 19.198 |
| 4 | ແຂວງອຸດົມໄຊ | 85.889.361 | 132.722.287 | 44.521 | 44.824 |
| 5 | ແຂວງບໍ່ແກ້ວ | 78.529.069 | 84.474.438 | 25.035 | 25.979 |
| 6 | ແຂວງຫຼວງພະບາງ | 199.281.729 | 192.229.141 | 62.051 | 59.752 |
| 7 | ແຂວງຫົວພັນ | 122.875.478 | 88.380.912 | 25.410 | 18.217 |
| 8 | ແຂວງໄຊຍະບູລີ | 137.091.132 | 128.340.409 | 45.888 | 43.813 |
| 9 | ແຂວງຊຽງຂວາງ | 58.179.007 | 61.248.372 | 47.297 | 50.856 |
| 10 | ແຂວງວຽງຈັນ | 143.417.706 | 135.770.846 | 36.019 | 33.840 |
| 11 | ແຂວງບໍລິຄຳໄຊ | 69.760.100 | 107.329.446 | 22.020 | 23.327 |
| 12 | ແຂວງຄຳມ່ວນ | 54.005.871 | 64.267.334 | 24.193 | 27.834 |
| 13 | ແຂວງສະຫວັນນະເຂດ | 88.009.750 | 66.353.371 | 28.449 | 27.445 |
| 14 | ແຂວງສາລະວັນ | 106.448.028 | 106.407.024 | 31.154 | 32.434 |
| 15 | ແຂວງເຊກອງ | 86.141.290 | 77.660.787 | 23.685 | 21.463 |
| 16 | ແຂວງຈຳປາສັກ | 117.162.000 | 113.758.000 | 30.018 | 32.956 |
| 17 | ແຂວງອັດຕະປື | 61.771.292 | 72.428.229 | 15.967 | 11.575 |
| 18 | ແຂວງໄຊສົມບູນ | 77.425.870 | 73.343.726 | 19.594 | 20.994 |
| **ສະເລ່ຍ** | | **106.183.244** | **102.187.344** | **37.438** | **34.588** |

### 6.6.1 ລາຍຮັບຈາກການຂາຍນໍ້າ ຕໍ່ພະນັກງານໜຶ່ງຄົນ




**ຮູບທີ 6.10** ລາຍຮັບຈາກການຂາຍນໍ້າຕໍ່ພະນັກງານໜຶ່ງຄົນ ຂອງລັດວິສາຫະກິດນໍ້າປະປາ

ຮູບທີ 6.10 ສະແດງໃຫ້ເຫັນວ່າ ຜົນການດໍາເນີນງານ ດ້ານລາຍຮັບຈາກການຂາຍນໍ້າຕໍ່ ພະນັກງານໜຶ່ງຄົນ ຂອງລັດວິສາຫະກິດນໍ້າປະປາ ໃນຂອບເຂດທົ່ວປະເທດ ແມ່ນເພີ່ມຈາກ 102.187.334 ກີບ ໃນປີ 2017 ມາເປັນ 106.183.244 ກີບ ໃນປີ 2018 ເຊິ່ງເພີ່ມຂຶ້ນ 3.995.900 ກີບ ເທົ່າກັບ 4%. ໃນປີ 2018 ນີ້ມີ 9 ລັດວິສາຫະກິດ ທີ່ລາຍຮັບຈາກການຂາຍນໍ້າຕໍ່ພະນັກງານໜຶ່ງຄົນເພີ່ມຂຶ້ນ ແລະ ອີກ 9 ລັດວິສາຫະກິດລາຍຮັບຫຼຸດລົງ ຈາກປີທີ່ຜ່ານມາ. ໃນ 9 ລັດວິສາຫະກິດທີ່ລາຍຮັບເພີ່ມຂຶ້ນ ມີ 3 ລັດວິສາຫະກິດ ທີ່ມີອັດຕາສ່ວນລາຍຮັບເພີ່ມຂຶ້ນສະເລ່ຍ ແຕ່ 17-28% ຄື: ນະຄອນຫຼວງວຽງຈັນ, ຫຼວງນໍ້າທາ ແລະ ອັດຕະປື; ສໍາລັບ ແຂວງອຸດົມໄຊ ແລະ ບໍລິຄໍາໄຊ ມີອັດຕາສ່ວນລາຍຮັບ ເພີ່ມຂຶ້ນເກີນ 50%; ສ່ວນລັດວິສາຫະກິດນໍ້າປະປາແຂວງຜົ້ງສາລີ, ບໍ່ແກ້ວ, ຊຽງຂວາງ ແລະ ຄໍາມ່ວນ ເພີ່ມຂຶ້ນສະເລ່ຍ ບໍ່ເກີນ 7% ແລະ ອີກ 9 ລັດວິສາຫະກິດທີ່ມີລາຍຮັບຈາກການຂາຍນໍ້າຫຼຸດລົງນັ້ນ ເຫັນວ່າ ມີ 2 ລັດວິສາ ຫະກິດ ທີ່ມີລາຍຮັບຈາກການຂາຍນໍ້າ ຫຼຸດລົງ ເຖິງ 25% ຄື: ແຂວງຫົວພັນ ແລະ ສະຫວັນນະເຂດ, ສ່ວນ ອີກ 7 ລັດວິສາຫະກິດທີ່ເຫຼືອເຖິງຈະຫຼຸດລົງແຕ່ກໍ່ຫຼຸດລົງບໍ່ເຖິງ 10%.

ຜົນການຈັດຕັ້ງປະຕິບັດ ດ້ານການຈັດເກັບລາຍຮັບການຂາຍນໍ້າຕໍ່ພະນັກງານໜຶ່ງຄົນ ປີ 2018 ໂດຍສະເລ່ຍ ທົ່ວປະເທດເຫັນວ່າເຮັດໄດ້ດີໃນລະດັບໜຶ່ງ ເພາະຖ້າສົມທຽບຕໍ່ເດືອນຈະເຫັນວ່າ ພະນັກງານຜູ້ໜຶ່ງສາມາດສ້າງລາຍຮັບ ໃຫ້ລັດວິສາຫະກິດ ສະເລ່ຍປະມານ 8.8 ລ້ານກວ່າກີບ; ຕົວເລກລາຍຮັບນີ້ ບໍ່ໄດ້ໝາຍຄວາມວ່າຈະພຽງພໍ ຫຼື ດຸ່ນດ່ຽງ ກັບ ລາຍຈ່າຍຄ່າຫຼຸ້ຍຫ້ຽນຊັບສົມບັດ ທີ່ເປັນຕົ້ນທຶນຄົງທີ່ ກວມອັດຕາສ່ວນສູງປະມານ 25% ຂອງຕົ້ນທຶນດໍາເນີນງານທັງໝົດ.

### 6.6.2 ປະລິມານນ້ຳທີ່ສົ່ງອອກຕໍ່ພະນັກງານໜຶ່ງຄົນ




**ຮູບທີ 6.11** ປະລິມານນ້ຳສົ່ງອອກຕໍ່ພະນັກງານໜຶ່ງຄົນ ຂອງລັດວິສາຫະກິດນ້ຳປະປາ

ຮູບທີ 6.11 ສະແດງໃຫ້ເຫັນວ່າ ປະລິມານນ້ຳສົ່ງອອກຕໍ່ພະນັກງານໜຶ່ງຄົນ ແມ່ນ 34.588 ມ$^3$ ໃນປີ 2018 ເຊິ່ງຫຼຸດລົງ 2.850 ມ$^3$ ສະເລ່ຍ 8% ທຽບໃສ່ປີ 2017 (37.438 ມ$^3$); ປະລິມານນ້ຳສົ່ງອອກ ທຽບໃສ່ປີຜ່ານມາ ເຫັນວ່າ ມີ 9 ວິສາຫະກິດທີ່ສົ່ງອອກໄດ້ເພີ່ມຂຶ້ນ ແຕ່ມີພຽງ ແຂວງຜົ້ງສາລີ ທີ່ສົ່ງອອກເພີ່ມຂຶ້ນສູງເຖິງ 27% ແລະ ຖັດມາແມ່ນແຂວງຄຳມ່ວນ ແລະ ຈຳປາສັກ 10-15%, ສ່ວນທີ່ເຫຼືອ ຄື: ແຂວງ ອຸດົມໄຊ, ບໍ່ແກ້ວ, ຊຽງຂວາງ, ບໍລິຄຳໄຊ, ສາລະວັນ ແລະ ໄຊສົມບູນ ເພີ່ມຂຶ້ນໂດຍສະເລ່ຍບໍ່ເກີນ 10%. ສ່ວນອີກ 9 ລັດວິສາຫະກິດທີ່ປະລິມານນ້ຳສົ່ງອອກ ຕ່ຳກວ່າປີຜ່ານມາເຫັນວ່າ ມີ 3 ລັດວິສາຫະກິດ ຄື: ນະຄອນຫຼວງວຽງຈັນ, ຫົວພັນ ແລະ ອັດຕະປື ທີ່ປະລິມານນ້ຳສົ່ງອອກ ຫຼຸດລົງເກີນ 28%, ສ່ວນ ລັດວິສາຫະກິດນ້ຳປະປາ ແຂວງຫຼວງນ້ຳທາ, ຫຼວງພະບາງ, ໄຊຍະບູລີ, ວຽງຈັນ, ສະຫວັນນະເຂດ ແລະ ແຂວງເຊກອງ ແມ່ນຫຼຸດລົງສະເລ່ຍຕ່ຳກວ່າ 10%.

ສະຫຼຸບແລ້ວ ປີ 2018 ທັງໝົດ 18 ລັດວິສາຫະກິດນ້ຳປະປາ ສາມາດສະໜອງນ້ຳປະປາໃຫ້ລູກຄ້າໂດຍສະເລ່ຍໄດ້ພຽງ 34.588 ມ$^3$/ປີ ເຊິ່ງພໍພຽງກັບຜູ້ໃຊ້ນ້ຳ ປະເພດຄົວເຮືອນໃນຕົວເມືອງຂະໜາດກາງ 100-120 ລິດ/ວັນ/ຄົນ; ຖືວ່າປະລິມານການສະໜອງນ້ຳ ແມ່ນເຮັດໄດ້ດີໃນລະດັບໜຶ່ງ ຖ້າທຽບໃສ່ຕົວຊີ້ວັດປະສິດທິພາບ ຂອງການນຳໃຊ້ພະນັກງານ 1 ຄົນ ຕ້ອງຄວບຄຸມໝໍ້ແທກນ້ຳໃຫ້ໄດ້ 100 ໜ່ວຍ (10 ຄົນ/1.000 ກົງເຕີ).

**ຕາຕະລາງ 6.11** ການບໍລິໂພກຂອງປະເພດຄົວເຮືອນ

| ລ/ດ | ປະເພດຕົວເມືອງ | ຈຳນວນປະຊາກອນ ທີ່ໄດ້ຮັບການບໍລິການ(ຄົນ) | ຄວາມຕ້ອງການປະເພດ ຄົວເຮືອນ(ລິດ/ຄົນ/ວັນ) |
|---|---|---|---|
| I | ນະຄອນຫຼວງ | > 100.000 | 200-250 |
| II | ຕົວເມືອງໃຫຍ່ | 50.000-100.000 | 120-200 |
| III | ຕົວເມືອງກາງ | 20.000-50.000 | 100-120 |
| IV | ຕົວເມືອງນ້ອຍ (ມີສັກກະຍະພາບສູງ) | 5.000-20.000 | 80-100 |
| V | ຕົວເມືອງນ້ອຍ (ມີສັກກະຍະພາບຕ່ຳ) | 2.000-5.000 | 60-80 |
| IV | ຊຸມຊົນ | < 2.000 | 40-60 |

## 7. ສິ່ງທ້າທາຍ ແລະ ມາດຕະການປັບປຸງແກ້ໄຂ

### 7.1 ສິ່ງທ້າທາຍ

ສິ່ງທ້າທາຍ ຂອງການດຳເນີນທຸລະກິດ ແມ່ນປັດໃຈຫຼັກທີ່ຈະຕ້ອງໄດ້ມີວິທີການ ແລະ ມາດຕະການທີ່ເໝາະສົມໃນການແກ້ໄຂເປັນແຕ່ລະໄລຍະ ເພື່ອປັບປຸງ ແລະ ຍົກສູງປະສິດທິພາບ ຂອງການດຳເນີນທຸລະກິດ ແນ່ໃສ່ໃຫ້ຜູ້ບໍລິໂພກໄດ້ຮັບການບໍລິການທີ່ປອດໄພ, ການສະໜອງມີສະຖຽນລະພາບ ແລະ ທຸລະກິດມີຄວາມຍືນຍົງ, ດັ່ງທີ່ສັງລວມລຸ່ມນີ້:

1. ງົບປະມານໃນການສ້າງ ແລະ ທົບທວນ ແຜນດຳເນີນທຸລະກິດ ຍັງບໍ່ທັນພຽງພໍ, ເຊິ່ງປະຈຸບັນແມ່ນມີພຽງ 13 ລັດວິສາຫະກິດນ້ຳປະປາ ທີ່ໄດ້ສ້າງ ແລະ ທົບທວນ ແຜນດຳເນີນທຸລະກິດ ໂດຍລວມແມ່ນໄດ້ ຈາກການຊ່ວຍເຫຼືອ ຂອງທະນາຄານພັດທະນາອາຊີ (ADB) ແລະ ອົງການພັດທະນາຂອງ ປະເທດນອກແວ ທີ່ຢູ່ພາຍໃຕ້ເງື່ອນໄຂຂອງໂຄງການ;
2. ການນຳໃຊ້ໂຮງງານທາງດ້ານກຳລັງການຜະລິດຕາມການອອກແບບ ເຫັນວ່າ ຍັງບໍ່ທັນໄດ້ນຳໃຊ້ເຕັມອັດຕາ;
3. ອັດຕາສ່ວນປະເພດເຄື່ອງໄຟຟ້າ-ກົນຈັກ ທີ່ເກີນອາຍຸການນຳໃຊ້ ເພີ່ມຂຶ້ນເປັນສ່ວນຫຼາຍ;
4. ອັດຕາສ່ວນສາຍທໍ່ທີ່ເກີນອາຍຸການນຳໃຊ້ ເພີ່ມຂຶ້ນຕື່ມ ເປັນ 6 ລັດວິສາຫະກິດ;
5. ອັດຕາສ່ວນປົກຄຸມພື້ນການທີ່ບໍລິການ ມີທັງໝົດ 8 ລັດວິສາຫະກິດ ທີ່ບໍ່ສາມາດບັນລຸໄດ້ 70%;
6. ອັດຕາສ່ວນນ້ຳບໍ່ສ້າງລາຍຮັບ ທີ່ສູງເກີນ 25% ມີທັງໝົດ 12 ລັດວິສາຫະກິດ;
7. ອັດຕາສ່ວນໃບເກັບເງິນຄ່ານ້ຳປະປາ ທີ່ມີອັດຕາສ່ວນສູງເກີນເຄິ່ງໜຶ່ງ ຂອງຈຳນວນໃບເກັບເງິນຄ່ານ້ຳປະປາ ທີ່ແຈກຈ່າຍໃຫ້ລູກຄ້າ ຍັງບໍ່ໄດ້ຈ່າຍ ມີທັງໝົດ 3 ລັດວິສາຫະກິດ;
8. ອັດຕາສ່ວນເງິນຄ່ານ້ຳປະປາ ທີ່ຍັງບໍ່ໄດ້ຈ່າຍສູງເກີນ 25% ມີທັງໝົດ 5 ລັດວິສາຫະກິດ;
9. ລາຄາຕົ້ນທຶນການດຳເນີນງານ ສັງລວມແລ້ວ ມີເຖິງ 14 ລັດວິສາຫະກິດ ທີ່ເພີ່ມຂຶ້ນຈາກປີຜ່ານມາ;
10. ລາຄາຫົວໜ່ວຍນ້ຳຂາຍ ທີ່ຫຼຸດລົງມີເຖິງ 9 ລັດວິສາຫະກິດ;
11. ການເຂົ້າເຖິງຂໍ້ມູນການດຳເນີນງານ ຂອງວິສາຫະກິດເອກະຊົນ ທັງໃນຮູບແບບຂາຍຍົກ ແລະ ບໍລິການແບບຄົບວົງຈອນຄືກັນກັບ ລັດວິສາຫະກິດນ້ຳປະປາແຂວງ, ນະຄອນຫຼວງ;

12. ດ້ານຕົວຊີ້ວັດ ຍັງບໍ່ສາມາດປະເມີນຜົນໄດ້ມີ 12 ຕົວຊີ້ວັດ ທີ່ເປັນເອກະພາບກັນ.

## 7.2 ມາດຕະການປັບປຸງແກ້ໄຂ

1. ໃນການສ້າງແຜນດຳເນີນທຸລະກິດ ເປົ້າໝາຍຂອງກົມນ້ຳປະປາ ຈະໃຫ້ການຊຸກຍູ້ລັດວິສາຫະກິດນ້ຳປະປາ ສ້າງແຜນໃນການດຳເນີນທຸລະກິດໃຫ້ໄດ້ທັງໝົດ ໂດຍເລີ່ມຈາກການກະກຽມດ້ານບຸກຄະລາກອນ ແລະ ການເກັບກຳຂໍ້ມູນທີ່ກ່ຽວຂ້ອງທາງດ້ານເຕັກນິກ-ການເງິນ ເພື່ອສ້າງແຜນດຳເນີນທຸລະກິດ ທີ່ນອນຢູ່ໃນໂຄງການພັດທະນາຄວາມອາດສາມາດ ໃຫ້ແກ່ຂະແໜງນ້ຳປະປາ ທີ່ສະໜັບສະໜູນໂດຍອົງການ JICA, ທະນາຄານພັດທະນາອາຊີ ADB ແລະ ທຶນຂອງລັດວິສາຫະກິດເອງ ເທື່ອລະກ້າວ;
2. ເພີ່ມການຕິດຕັ້ງຕໍ່ນ້ຳເຂົ້າບ້ານໃຫ້ຫລາຍຂຶ້ນ ເພື່ອຈະເພີ່ມບໍລິມາດຈຳໜ່າຍ, ພ້ອມດຽວກັນນັ້ນ ຈະສົ່ງຜົນໃຫ້ສາມາດເພີ່ມກຳລັງການຜະລິດໄດ້ພຽງພໍ;
3. ບັນດາລັດວິສາຫະກິດນ້ຳປະປາ ມີອັດຕາສ່ວນປະເພດ ເຄື່ອງໄຟຟ້າ-ກົນຈັກ ເກີນອາຍຸນຳໃຊ້ຕ້ອງໄດ້ຮີບດ່ວນຂຶ້ນແຜນສ້ອມແປງ, ປ່ຽນຖ່າຍຮອງຮັບໄວ້ ເພື່ອຮັກສາສະຖຽນລະພາບ ການຜະລິດໃຫ້ຕໍ່ເນື່ອງ ຮັບປະກັນໄດ້ ປະລິມານທີ່ພຽງພໍ ກັບຄວາມຕ້ອງການ ຂອງ ຜູ້ບໍລິໂພກ;
4. ບັນດາອັດຕາສ່ວນສາຍທໍ່ທີ່ເກີນອາຍຸການນຳໃຊ້ເພີ່ມຂຶ້ນ, ຈຳເປັນຕ້ອງໄດ້ມີແຜນການປ່ຽນຖ່າຍຮອງຮັບໄວ້ ດ້ວຍການລົງສຳຫຼວດລະບົບສາຍທໍ່ແຕ່ລະຂະໜາດ, ແຕ່ລະປະເພດເພື່ອຮັກສາໄວ້ ຄວາມມີສະເຖຍລະພາບຂອງການສະໜອງນ້ຳຢ່າງຕໍ່ເນື່ອງ;
5. ອັດຕາສ່ວນປົກຄຸມພື້ນທີ່ການບໍລິການ ທີ່ບໍ່ສາມາດບັນລຸໄດ້ຮອດ 70% ຊຶ່ງມີທັງໝົດ 8 ລັດວິສາຫະກິດນ້ຳປະປາ ຕ້ອງເອົາໃຈໃສ່ໃນການຕິດຕັ້ງຕໍ່ນ້ຳໃຫ້ລູກຄ້າ ດ້ວຍນະໂຍບາຍແບບຜ່ອນຜັນເປັນຕົ້ນ: ການຕິດຕັ້ງຕໍ່ນ້ຳແບບຈ່າຍຜ່ອນ, ການຕິດຕັ້ງຕໍ່ນ້ຳໂດຍບໍ່ໄດ້ຈ່າຍຄ່າຕິດຕັ້ງ ແລະ ການຕິດຕັ້ງ ໂດຍໃຊ້ງົບປະມານຂອງແຂວງ ຕາມຄວາມເໝາະສົມ ລວມທັງການຂະຫຍາຍລະບົບຕາຂ່າຍສາຍທໍ່ບໍລິການໄປຍັງເຂດທີ່ມີຄວາມຕ້ອງການນ້ຳ;
6. ການຄຸ້ມຄອງນ້ຳບໍ່ສ້າງລາຍຮັບທີ່ສູງເກີນ 25% ນັ້ນ; ບັນດາລັດວິສາຫະກິດນ້ຳປະປາ ຕ້ອງໄດ້ເອົາໃຈໃສ່ຫຼຸດຜ່ອນຢ່າງຕັ້ງໜ້າ ເພື່ອບໍ່ໃຫ້ເກີນ 25% ດ້ວຍການຕັ້ງລະບົບ ຕິດຕາມກວດການ້ຳຮົ່ວໄຫຼແບບເປັນເຂດ (DMA) ຫຼື ຕິດຕາມແບບໜ້າກະດານ, ສ້ອມແປງທໍ່ແຕກທໍ່ຮົ່ວ, ປ່ຽນຖ່າຍ ທໍ່ເກົ່າ, ປ່ຽນຖ່າຍໝໍ້ແທກນ້ຳເກົ່າແກ່, ລ້າງສິ່ງອຸດຕັນໃນລະບົບສາຍທໍ່ ລວມທັງໃຊ້ມາດຕະການ ບັງຄັບຕໍ່ຜູ້ລັກໃຊ້ນ້ຳ;
7. ບັນດາລັດວິສາຫະກິດ ທີ່ອັດຕາສ່ວນໃບເກັບເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍຈາກລູກຄ້າສູງ ຕ້ອງໄດ້ເອົາໃຈໃສ່ໃນການທວງຖາມ ຫຼື ເປີດຊ່ອງທາງໃນການຊຳລະໃຫ້ລູກຄ້າມີທາງເລືອກໃຫ້ຫຼາຍຂຶ້ນ ເປັນຕົ້ນ: ເພີ່ມເວລາໃນການລົງຈັດເກັບກັບທີ່, ຊຳລະທາງເອເລັກໂທນິກ, ຊຳລະທາງທະນາຄານ, ຊຳລະທາງໄປສະນີ ຕາມຄວາມເໝາະສົມ;
8. ໃນອັດຕາສ່ວນເງິນຄ່ານ້ຳທີ່ຍັງບໍ່ໄດ້ຈ່າຍ ຂອງບັນດາລັດວິສາຫະກິດທີ່ສູງ ຕ້ອງໄດ້ເອົາໃຈໃສ່ທວງຖາມຢ່າງຕໍ່ເນື່ອງກັບທີ່, ກວດຄືນໜີ້ປະເພດສຳນັກງານອົງການລັດ ທີ່ມີສາລະບານງົບປະມານ ຂຶ້ນ

ກັບ ຂະແໜງການໃດ ໂດຍອາດຈະໃຊ້ມາດຕະການໃດໜຶ່ງທີ່ເໝາະສົມ ຫຼື ນະໂຍບາຍການຊຳລະເປັນງວດ ແລະ ເປັນປີເພື່ອຫຼຸດລົງໜີ້ເສຍ;

9. ບັນດາລັດວິສາຫະກິດ ທີ່ລາຄາຕົ້ນທຶນການດຳເນີນງານເພີ່ມຂຶ້ນ ຕ້ອງໄດ້ເອົາໃຈໃສ່ຄວບຄຸມຄ່າໃຊ້ຈ່າຍທີ່ບໍ່ຈຳເປັນລົງ ເປັນຕົ້ນ: ຄວບຄຸມນ້ຳສູນເສຍທີ່ເປັນຕົ້ນທຶນທາງກົງ, ຄວບຄຸມລາຍຈ່າຍຄຸ້ມຄອງບໍລິຫານ, ຄ່າໃຊ້ຈ່າຍແຮງງານ ແລະ ສະຫວັດດີການສັງຄົມ ທີ່ເຫັນວ່າເປັນການຟຸມເຟືອຍ ແລະເກື້ອກູນເກີນຄວາມຈຳເປັນ ລວມທັງການນຳໃຊ້ພະນັກງານໃຫ້ເໝາະສົມກັບຕຳແໜ່ງງານ, ສ້າງລະບຽບການໃນການຄຸ້ມຄອງບໍລິຫານພາຍໃນ ໂດຍການຮັບຮອງຂອງສະພາບໍລິຫານລັດວິສາຫະກິດ, ຂົນຂວາຍແຫຼ່ງທຶນກູ້ຢືມທີ່ມີດອກເບ້ຍຕ່ຳໄລຍະການໃຊ້ແທນຕົ້ນທຶນຍາວ ເພື່ອຫຼຸດຜ່ອນຕົ້ນທຶນ ທີ່ເປັນພາລະແບກຫາບ ຂອງລັດວິສາຫະກິດ ທີ່ສົ່ງຜົນກະທົບໂດຍກົງຕໍ່ລາຄານ້ຳ;

10. ບັນດາລັດວິສາຫະກິດ ທີ່ລາຄາຫົວໜ່ວຍນ້ຳຂາຍຫຼຸດລົງນັ້ນ ຕ້ອງໄດ້ເອົາໃຈໃສ່ໃຫ້ລາຄານ້ຳຂາຍເພີ່ມຂຶ້ນຢ່າງນ້ອຍໃຫ້ພຽງພໍກັບຕົ້ນທຶນການດຳເນີນງານ ເພື່ອໃຫ້ທຸລະກິດມີລາຍຮັບພຽງພໍກັບລາຍຈ່າຍຫຼືມີກຳໄລເລັກໜ້ອຍ. ການທີ່ຈະເຮັດໃຫ້ລາຄານ້ຳຂາຍເພີ່ມຂຶ້ນ ຕ້ອງໄດ້ເພີ່ມບໍລິມາດ ນ້ຳຂາຍ ແລະ ເພີ່ມການຕິດຕັ້ງໝໍ້ແທກນ້ຳເຂົ້າເຮືອນໃຫ້ຫຼາຍຂຶ້ນ ດ້ວຍການເພີ່ມກຳລັງການຜະລິດ, ເພີ່ມບໍລິມາດນ້ຳຂາຍ, ເພີ່ມແຮງດັນນ້ຳໃນລະບົບສາຍທໍ່, ຫຼຸດຜ່ອນນ້ຳບໍ່ສ້າງລາຍຮັບລົງ, ຂະຫຍາຍທໍ່ແຈກທໍ່ບໍລິການ, ຕິດຕັ້ງໝໍ້ແທກນ້ຳໃຫ້ໄດ້ໄວຂຶ້ນ;

11. ບັນດາຕົວຊີ້ວັດທີ່ຍັງບໍ່ສາມາດປະເມີນຜົນໄດ້ 12 ຕົວຊີ້ວັດນີ້ ຍ້ອນບໍ່ສາມາດຕີລາຄາໄດ້ພ້ອມກັນທັງໝົດ ຍ້ອນບໍ່ໄດ້ມີການຈັດເກັບຂໍ້ມູນສອດຄ່ອງກັບສູດຄິດໄລ່ ຈຶ່ງເປັນສາເຫດໃຫ້ບໍ່ສາມາດປະເມີນຜົນໄດ້ຄົບ 23 ຕົວຊີ້ວັດ, ສະນັ້ນ ບັນດາລັດວິສາຫະກິດ ທີ່ບໍ່ມີຂໍ້ມູນຕ້ອງໄດ້ເອົາໃຈໃສ່ ໃນການເກັບກຳ ດ້ວຍການສ້າງໜ່ວຍງານຄຸ້ມຄອງຂໍ້ມູນ, ເຜີຍແຜ່ແບບຟອມເກັບກຳຂໍ້ມູນ ໃຫ້ເປັນລະບົບເຊື່ອມໂຍງ ລະຫວ່າງ ສຳນັກງານໃຫຍ່ ແລະ ສາຂາທີ່ຂື້ນກັບ, ຕິດຕາມ-ປັບປຸງຂໍ້ມູນທີ່ບໍ່ຖືກຕ້ອງ, ສັງລວມແຜ່ນແຕ້ມລະບົບຕາຂ່າຍສາຍທໍ່ ແລະ ສິ່ງອຳນວຍຄວາມສະດວກນ້ຳປະປາໄວ້ໃນລະບົບຖານຂໍ້ມູນ ຕາມຄວາມເໝາະສົມ.

## 8. ທິດທາງແຜນການສ້າງບົດລາຍງານ

ໃນການສ້າງບົດລາຍງານ ຂະແໜງການນ້ຳປະປາ ປະຈຳປີຄັ້ງຕໍ່ໄປ ເພື່ອໃຫ້ເນື້ອໃນ ຂອງການລາຍງານຄົບຖ້ວນ, ມີຄວາມຊັດເຈນ ແລະ ສ້າງຄວາມສົນໃຈແກ່ຜູ້ອ່ານ; ກົມນ້ຳປະປາ ຜູ້ສ້າງ ແລະ ພິມເຜີຍແຜ່ ຈະລົງເລິກໃນການຕິດຕາມ ເພື່ອຊຸກຍູ້ສົ່ງເສີມໃຫ້ບັນດາລັດວິສາຫະກິດ ທີ່ຍັງບໍ່ສາມາດປະຕິບັດໄດ້ໃນການແກ້ໄຂສິ່ງທ້າທາຍໃນຕໍ່ໜ້າ ດ້ວຍການລົງເຜີຍແຜ່ແບບຟອມເກັບກຳຂໍ້ມູນ ແລະ ແນະນຳວິທີການຄິດໄລ່ຕົວຊີ້ວັດ ເປັນແຕ່ລະລັດວິສາຫະກິດ ໂດຍມີຫ້ອງການສາຂາເຂົ້າຮ່ວມ ແນ່ໃສ່ໃຫ້ສ້າງຄວາມເຂັ້ມແຂງໃຫ້ພະນັກງານທ້ອງຖິ່ນຫຼາຍຂຶ້ນ. ຄຽງຄູ່ກັບນັ້ນ, ຈະໄດ້ແນະນຳລົງເລິກລາຍລະອຽດ ກ່ຽວກັບມາດຕະການໃນການແກ້ໄຂບັນຫາ ແລະ ປຶກສາຫາລືສ້າງເປັນແຜນງານບຸລິມະສິດ ຕາມຄວາມເໝາະສົມ.

ສະເພາະ ການປະເມີນຜົນການດຳເນີນງານ ທີ່ບໍ່ສາມາດປະເມີນຜົນໄດ້ຄົບທັງໝົດ 23 ຕົວຊີ້ວັດ; ພວກເຮົາຈະບຸກບືນເກັບກຳຂໍ້ມູນໃຫ້ສາມາດປະເມີນຜົນໄດ້ຄົບຖ້ວນ ໃນບົດລາຍງານ ປີ 2019 ດັ່ງແຜນການລະອຽດຕໍ່ໄປນີ້:

**ຕາຕະລາງ 8.1** ແຜນການສ້າງບົດລາຍງານປະຈຳປີ 2019

| | ປີ 2020 | | | | ປີ 2021 | |
|---|---|---|---|---|---|---|
| **ກິດຈະກຳ** | **ກັນຍາ** | **ຕຸລາ** | **ພະຈິກ** | **ທັນວາ** | **ມັງກອນ** | **ກຸມພາ** |
| 1. ເກັບກຳຂໍ້ມູນ (ພະແນກດັດສົມທຸລະກິດນ້ຳປະປາ) | ■ | ■ | | | | |
| 2. ສັງລວມຂໍ້ມູນ (ພະແນກດັດສົມທຸລະກິດນ້ຳປະປາ ຮ່ວມກັບ ທີມງານຊ່ຽວຊານ) | | ■ | ■ | | | |
| 3. ຮ່າງບົດລາຍງານ (ພະແນກດັດສົມທຸລະກິດນ້ຳປະປາ ຮ່ວມກັບ ທີມງານຊ່ຽວຊານ) | | | ■ | ■ | | |
| 4. ຜ່ານຮ່າງບົດລາຍງານ (ກົມນ້ຳປະປາ) | | | | | ■ | |
| 5. ພິມເຜີຍແຜ່ (ກົມນ້ຳປະປາ) | | | | | | ■ |

## ເອກະສານຊ້ອນທ້າຍ 1: ໃບລາຍງານ ຜົນການດຳເນີນງານ ດ້ານການເງິນ

### ລັດວິສາຫະກິດນ້ຳປະປາ ນະຄອນຫຼວງວຽງຈັນ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 172.753.517 |
| ຕົ້ນທຶນການດຳເນີນງານ | 141.786.823 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **30.966.694** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 37.585.627 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 11.226.658 |
| ອາກອນກຳໄລ | - |
| **ກຳໄລສຸດທິຫລັງອາກອນ** | **(17.845.591)** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 390.643.492 |
| ຊັບສິນໃນທຸລະກິດສຸດທິ | 112.474.759 |
| **ຊັບສິນທັງໝົດສຸດທິ** | **503.118.252** |
| ໜີ້ສິນໃນທຸລະກິດ | 76.904.466 |
| ເງິນກູ້ໄລຍະຍາວ | 7.941.274 |
| ທຶນຕົນເອງ | 418.272.511 |
| **ໜີ້ສິນທັງໝົດ** | **503.118.252** |

### ລັດວິສາຫະກິດນ້ຳປະປາ ແຂວງຜົ້ງສາລີ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 3.915.334 |
| ຕົ້ນທຶນການດຳເນີນງານ | 3.677.094 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **238.239** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 2.625.839 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 74.01 |
| ອາກອນກຳໄລ | - |
| **ກຳໄລສຸດທິຫລັງອາກອນ** | **(2.462.301)** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 33.006.802 |
| ຊັບສິນໃນທຸລະກິດສຸດທິ | 922.752 |
| **ຊັບສິນທັງໝົດສຸດທິ** | **33.929.555** |
| ໜີ້ສິນໃນທຸລະກິດ | 26.000 |
| ເງິນກູ້ໄລຍະຍາວ | 6.057.450 |
| ທຶນຕົນເອງ | 27.846.105 |
| **ໜີ້ສິນທັງໝົດ** | **33.929.555** |

### ລັດວິສາຫະກິດນ້ຳປະປາ ແຂວງຫຼວງນ້ຳທາ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 8.716.200 |
| ຕົ້ນທຶນການດຳເນີນງານ | 8.530.587 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **185.612** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 124.200 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | - |
| ອາກອນກຳໄລ | - |
| **ກຳໄລສຸດທິຫລັງອາກອນ** | **61.412** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 20.992.540 |
| ຊັບສິນໃນທຸລະກິດສຸດທິ | 1.539.408 |
| **ຊັບສິນທັງໝົດສຸດທິ** | **22.531.948** |
| ໜີ້ສິນໃນທຸລະກິດ | 1.351.328 |
| ເງິນກູ້ໄລຍະຍາວ | 35.526.315 |
| ທຶນຕົນເອງ | 14.345.694 |
| **ໜີ້ສິນທັງໝົດ** | **22.531.948** |

## ລັດວິສາຫະກິດນ້ຳປະປາ ແຂວງອຸດົມໄຊ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 13.993.053 |
| ຕົ້ນທຶນການດຳເນີນງານ | 11.462.764 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **2.530.289** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 1.854.002 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 375.237 |
| ອາກອນກຳໄລ | 72.251 |
| **ກຳໄລສຸດທິຫລັງອາກອນ** | **228.797** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 55.728.116 |
| ຊັບສິນໃນທຸລະກິດສຸດທິ | 12.701.813 |
| **ຊັບສິນທັງໝົດສຸດທິ** | **68.429.930** |
| ໜີ້ສິນໃນທຸລະກິດ | 2.860.707 |
| ເງິນກູ້ໄລຍະຍາວ | 10.013.555 |
| ທຶນຕົນເອງ | 55.555.666 |
| **ໜີ້ສິນທັງໝົດ** | **68.429.930** |

## ລັດວິສາຫະກິດນ້ຳປະປາ ແຂວງບໍ່ແກ້ວ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 7.712.065 |
| ຕົ້ນທຶນການດຳເນີນງານ | 6.664.339 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **1.047.725** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 954.274 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 75.681 |
| ອາກອນກຳໄລ | 4.264 |
| **ກຳໄລສຸດທິຫລັງອາກອນ** | **(13.505)** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 7.896.553 |
| ຊັບສິນໃນທຸລະກິດສຸດທິ | 3.533.158 |
| **ຊັບສິນທັງໝົດສຸດທິ** | **11.429.712** |
| ໜີ້ສິນໃນທຸລະກິດ | 1.156.191 |
| ເງິນກູ້ໄລຍະຍາວ | 2.514.541 |
| ທຶນຕົນເອງ | 7.758.979 |
| **ໜີ້ສິນທັງໝົດ** | **11.429.712** |

## ລັດວິສາຫະກິດນ້ຳປະປາ ແຂວງຫຼວງພະບາງ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 31.288.915 |
| ຕົ້ນທຶນການດຳເນີນງານ | 24.546.085 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **6.742.830** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 8.029.673 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 886.848 |
| ອາກອນກຳໄລ | - |
| **ກຳໄລສຸດທິຫລັງອາກອນ** | **(2.173.691)** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 69.968.912 |
| ຊັບສິນໃນທຸລະກິດສຸດທິ | 38.824.467 |
| **ຊັບສິນທັງໝົດສຸດທິ** | **108.793.379** |
| ໜີ້ສິນໃນທຸລະກິດ | 16.757.046 |
| ເງິນກູ້ໄລຍະຍາວ | 19.266.895 |
| ທຶນຕົນເອງ | 106.283.531 |
| **ໜີ້ສິນທັງໝົດ** | **108.793.379** |

## ລັດວິສາຫະກິດນ້ຳປະປາ ແຂວງຫົວພັນ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 6.780.306 |
| ຕົ້ນທຶນການດຳເນີນງານ | 5.702.561 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **1.077.744** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 7.137.172 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 640.840 |
| ອາກອນກຳໄລ | - |
| **ກຳໄລສຸດທິຫລັງອາກອນ** | **(6.700.267)** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 40.073.629 |
| ຊັບສິນໃນທຸລະກິດສຸດທິ | 6.015.266 |
| **ຊັບສິນທັງໝົດສຸດທິ** | **46.088.896** |
| ໜີ້ສິນໃນທຸລະກິດ | 2.355.529 |
| ເງິນກູ້ໄລຍະຍາວ | 8.830.153 |
| ທຶນຕົນເອງ | 34.903.212 |
| **ໜີ້ສິນທັງໝົດ** | **46.088.896** |

## ລັດວິສາຫະກິດນ້ຳປະປາ ແຂວງໄຊຍະບູລີ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 13.163.615 |
| ຕົ້ນທຶນການດຳເນີນງານ | 9.317.616 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **3.845.999** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 3.388.700 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 355.392 |
| ອາກອນກຳໄລ | 24.457 |
| **ກຳໄລສຸດທິຫລັງອາກອນ** | **77.449** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 87.242.763 |
| ຊັບສິນໃນທຸລະກິດສຸດທິ | 13.763.872 |
| **ຊັບສິນທັງໝົດສຸດທິ** | **101.006.635** |
| ໜີ້ສິນໃນທຸລະກິດ | 2.779.470 |
| ເງິນກູ້ໄລຍະຍາວ | 12.617.038 |
| ທຶນຕົນເອງ | 91.165.067 |
| **ໜີ້ສິນທັງໝົດ** | **101.006.635** |

## ລັດວິສາຫະກິດນ້ຳປະປາ ແຂວງຊຽງຂວາງ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 7.728.961 |
| ຕົ້ນທຶນການດຳເນີນງານ | 5.798.434 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **1.930.526** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 1.133.333 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 492.761 |
| ອາກອນກຳໄລ | 73.063 |
| **ກຳໄລສຸດທິຫລັງອາກອນ** | **231.369** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 32.089.138 |
| ຊັບສິນໃນທຸລະກິດສຸດທິ | 8.502.970 |
| **ຊັບສິນທັງໝົດສຸດທິ** | **40.592.109** |
| ໜີ້ສິນໃນທຸລະກິດ | 100.056 |
| ເງິນກູ້ໄລຍະຍາວ | 13.548.641 |
| ທຶນຕົນເອງ | 26.943.418 |
| **ໜີ້ສິນທັງໝົດ** | **40.592.109** |

## ລັດວິສາຫະກິດນ້ຳປະປາ ແຂວງວຽງຈັນ

| **ໃບລາຍງານຜົນໄດ້ຮັບ** | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 13.712.995 |
| ຕົ້ນທຶນການດຳເນີນງານ | 8.614.564 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **5.098.431** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 2.687.490 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 914.839 |
| ອາກອນກຳໄລ | 259.064 |
| **ກຳໄລສຸດທິຫລັງອາກອນ** | **1.237.038** |

| **ໃບສະຫຼຸບຊັບສົມບັດ** | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 45.179.033 |
| ຊັບສິນໃນທຸລະກິດສຸດທິ | 15.981.922 |
| **ຊັບສິນທັງໝົດສຸດທິ** | **61.160.956** |
| ໜີ້ສິນໃນທຸລະກິດ | 615.964 |
| ເງິນກູ້ໄລຍະຍາວ | 7.646.865 |
| ທຶນຕົນເອງ | 54.130.055 |
| **ໜີ້ສິນທັງໝົດ** | **61.160.956** |

## ລັດວິສາຫະກິດນ້ຳປະປາ ແຂວງບໍລິຄຳໄຊ

| **ໃບລາຍງານຜົນໄດ້ຮັບ** | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 11.650.112 |
| ຕົ້ນທຶນການດຳເນີນງານ | 9.270.179 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **2.379.933** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 2.902.297 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 167.320 |
| ອາກອນກຳໄລ | - |
| **ກຳໄລສຸດທິຫລັງອາກອນ** | **(689.684)** |

| **ໃບສະຫຼຸບຊັບສົມບັດ** | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 41.620.509 |
| ຊັບສິນໃນທຸລະກິດສຸດທິ | 9.387.657 |
| **ຊັບສິນທັງໝົດສຸດທິ** | **51.008.166** |
| ໜີ້ສິນໃນທຸລະກິດ | 50.189.577 |
| ເງິນກູ້ໄລຍະຍາວ | 240.528 |
| ທຶນຕົນເອງ | 1.059.117 |
| **ໜີ້ສິນທັງໝົດ** | **51.008.166** |

## ລັດວິສາຫະກິດນ້ຳປະປາ ແຂວງຄຳມ່ວນ

| **ໃບລາຍງານຜົນໄດ້ຮັບ** | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 11.197.204 |
| ຕົ້ນທຶນການດຳເນີນງານ | 10.731.185 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **466.018** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 14.048.007 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 50.843 |
| ອາກອນກຳໄລ | - |
| **ກຳໄລສຸດທິຫລັງອາກອນ** | **(13.632.832)** |

| **ໃບສະຫຼຸບຊັບສົມບັດ** | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 173.207.432 |
| ຊັບສິນໃນທຸລະກິດສຸດທິ | 4.598.083 |
| **ຊັບສິນທັງໝົດສຸດທິ** | **177.795.515** |
| ໜີ້ສິນໃນທຸລະກິດ | 5.499.148 |
| ເງິນກູ້ໄລຍະຍາວ | 1.741.331 |
| ທຶນຕົນເອງ | 170.555.036 |
| **ໜີ້ສິນທັງໝົດ** | **177.795.515** |

## ລັດວິສາຫະກິດນ້ຳປະປາ ແຂວງສະຫວັນນະເຂດ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---:|
| ລາຍຮັບທຸລະກິດ | 7.799.711 |
| ຕົ້ນທຶນການດຳເນີນງານ | 7.059.502 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **740.209** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 2.455.694 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 123.099 |
| ອາກອນກຳໄລ | 41.099 |
| **ກຳໄລສຸດທິຫລັງອາກອນ** | **(1.879.684)** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---:|
| ຊັບສິນຄົງທີ່ | 110.113.443 |
| ຊັບສິນໃນທຸລະກິດສຸດທິ | 8.555.561 |
| **ຊັບສິນທັງໝົດສຸດທິ** | **118.669.005** |
| ໜີ້ສິນໃນທຸລະກິດ | - |
| ເງິນກູ້ໄລຍະຍາວ | - |
| ທຶນຕົນເອງ | - |
| **ໜີ້ສິນທັງໝົດ** | **118.669.005** |

## ລັດວິສາຫະກິດນ້ຳປະປາ ແຂວງສາລະວັນ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---:|
| ລາຍຮັບທຸລະກິດ | 6.700.170 |
| ຕົ້ນທຶນການດຳເນີນງານ | 5.714.654 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **985.515** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 1.688.341 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 362.276 |
| ອາກອນກຳໄລ | - |
| **ກຳໄລສຸດທິຫລັງອາກອນ** | **(1.065.102)** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---:|
| ຊັບສິນຄົງທີ່ | 33.543.893 |
| ຊັບສິນໃນທຸລະກິດສຸດທິ | 6.185.231 |
| **ຊັບສິນທັງໝົດສຸດທິ** | **39.729.124** |
| ໜີ້ສິນໃນທຸລະກິດ | 4.366.982 |
| ເງິນກູ້ໄລຍະຍາວ | 3.866.158 |
| ທຶນຕົນເອງ | 31.495.983 |
| **ໜີ້ສິນທັງໝົດ** | **39.729.124** |

## ລັດວິສາຫະກິດນ້ຳປະປາ ແຂວງເຊກອງ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---:|
| ລາຍຮັບທຸລະກິດ | 5.089.358 |
| ຕົ້ນທຶນການດຳເນີນງານ | 4.141.940 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **947.418** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 1.827.522 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 53.934 |
| ອາກອນກຳໄລ | - |
| **ກຳໄລສຸດທິຫລັງອາກອນ** | **(934.038)** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---:|
| ຊັບສິນຄົງທີ່ | 26.481.468 |
| ຊັບສິນໃນທຸລະກິດສຸດທິ | 1.197.045 |
| **ຊັບສິນທັງໝົດສຸດທິ** | **27.678.513** |
| ໜີ້ສິນໃນທຸລະກິດ | 536.320 |
| ເງິນກູ້ໄລຍະຍາວ | 10.588.655 |
| ທຶນຕົນເອງ | 16.553.537 |
| **ໜີ້ສິນທັງໝົດ** | **27.678.513** |

## ລັດວິສາຫະກິດນ້ຳປະປາ ແຂວງຈຳປາສັກ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 28.027.881 |
| ຕົ້ນທຶນການດຳເນີນງານ | 22.516.989 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **5.510.891** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 3.109.655 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 2.243.948 |
| ອາກອນກຳໄລ | 37.748 |
| **ກຳໄລສຸດທິຫລັງອາກອນ** | **119.538** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 86.373.224 |
| ຊັບສິນໃນທຸລະກິດສຸດທິ | 16.829.700 |
| **ຊັບສິນທັງໝົດສຸດທິ** | **103.202.925** |
| ໜີ້ສິນໃນທຸລະກິດ | 41.561.422 |
| ເງິນກູ້ໄລຍະຍາວ | 29.664.526 |
| ທຶນຕົນເອງ | 31.976.976 |
| **ໜີ້ສິນທັງໝົດ** | **103.202.925** |

## ລັດວິສາຫະກິດນ້ຳປະປາ ແຂວງອັດຕະປື

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 2.770.173 |
| ຕົ້ນທຶນການດຳເນີນງານ | 2.673.019 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **97.154** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 406.514 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | 119.049 |
| ອາກອນກຳໄລ | 6.925 |
| **ກຳໄລສຸດທິຫລັງອາກອນ** | **(435.409)** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 10.136.107 |
| ຊັບສິນໃນທຸລະກິດສຸດທິ | 5.174.544 |
| **ຊັບສິນທັງໝົດສຸດທິ** | **15.310.651** |
| ໜີ້ສິນໃນທຸລະກິດ | 2.758.839 |
| ເງິນກູ້ໄລຍະຍາວ | 28.585 |
| ທຶນຕົນເອງ | 12.523.227 |
| **ໜີ້ສິນທັງໝົດ** | **15.310.651** |

## ລັດວິສາຫະກິດນ້ຳປະປາ ແຂວງໄຊສົມບູນ

| ໃບລາຍງານຜົນໄດ້ຮັບ | ຫົວໜ່ວຍ 1.000 ກີບ |
|---|---|
| ລາຍຮັບທຸລະກິດ | 1.629.825 |
| ຕົ້ນທຶນການດຳເນີນງານ | 1.159.203 |
| **ກຳໄລ/ຂາດ ການທຶນດຳເນີນງານ** | **470.622** |
| ຄ່າຫຼຸ້ຍຫ້ຽນຊັບສົມບັດ | 576.445 |
| ດອກເບ້ຍເງິນກູ້-ລາຍຈ່າຍການເງິນ | - |
| ອາກອນກຳໄລ | - |
| **ກຳໄລສຸດທິຫລັງອາກອນ** | **(105.823)** |

| ໃບສະຫຼຸບຊັບສົມບັດ | ຫົວໜ່ວຍ 1.000 ກີບ |
|---|---|
| ຊັບສິນຄົງທີ່ | 5.707.764 |
| ຊັບສິນໃນທຸລະກິດສຸດທິ | 1.744.731 |
| **ຊັບສິນທັງໝົດສຸດທິ** | **7.452.495** |
| ໜີ້ສິນໃນທຸລະກິດ | - |
| ເງິນກູ້ໄລຍະຍາວ | - |
| ທຶນຕົນເອງ | - |
| **ໜີ້ສິນທັງໝົດ** | **7.452.495** |

**ເອກະສານຊ້ອນທ້າຍ 2: ລາຍຮັບຈາກການຂາຍນ້ຳ ຂອງບັນດາລັດວິສາຫະກິດນ້ຳປະປາ ທົ່ວປະເທດ**

| ລຳດັບ | ລັດວິສາຫະກິດນ້ຳປະປາ | ປີ 2017 (ກີບ) | ປີ 2018 (ກີບ) |
|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 140.068.522.238 | 142.065.927.174 |
| 2 | ແຂວງຜົ້ງສາລີ | 3.221.782.700 | 3.344.303.600 |
| 3 | ແຂວງຫຼວງນ້ຳທາ | 6.458.982.743 | 8.073.403.917 |
| 4 | ແຂວງອຸດົມໄຊ | 12.207.124.451 | 12.741.339.630 |
| 5 | ແຂວງບໍ່ແກ້ວ | 6.427.055.301 | 6.918.641.513 |
| 6 | ແຂວງຫຼວງພະບາງ | 27.301.596.944 | 28.449.912.931 |
| 7 | ແຂວງຫົວພັນ | 5.553.243.162 | 5.745.279.314 |
| 8 | ແຂວງໄຊຍະບູລີ | 12.112.489.200 | 11.833.943.500 |
| 9 | ແຂວງຊຽງຂວາງ | 6.754.018.535 | 6.999.754.209 |
| 10 | ແຂວງວຽງຈັນ | 12.342.379.890 | 13.055.575.890 |
| 11 | ແຂວງບໍລິຄຳໄຊ | 8.292.557.219 | 9.121.260.603 |
| 12 | ແຂວງຄຳມ່ວນ | 8.419.707.450 | 9.662.814.400 |
| 13 | ແຂວງສະຫວັນນະເຂດ | 4.940.191.171 | 4.976.502.823 |
| 14 | ແຂວງສາລະວັນ | 6.003.515.336 | 6.065.200.400 |
| 15 | ແຂວງເຊກອງ | 4.565.488.388 | 4.504.325.620 |
| 16 | ແຂວງຈຳປາສັກ | 23.666.761.500 | 24.913.004.300 |
| 17 | ແຂວງອັດຕະປື | 2.965.022.004 | 2.607.416.236 |
| 18 | ແຂວງໄຊສົມບູນ | 1.200.886.080 | 1.320.187.060 |

## 9. ວິທີການຕິດຕາມ ແລະ ປະເມີນຜົນ

**<u>ອີງຕາມບັນດາເອກະສານທີ່ຖືກຮອງຮັບຢ່າງເປັນທາງການ</u>**

9.1 ດຳລັດ ຂອງນາຍົກລັດຖະມົນຕີ 37/ນຍ, ລົງວັນທີ 30/09/1999;

9.2 ດຳລັດ ຂອງນາຍົກລັດຖະມົນຕີ 191/ນຍ, ລົງວັນທີ 01/07/2005;

9.3 ຂໍ້ຕົກລົງ ຂອງ ກະຊວງ ສາທາລະນະສຸກ ວ່າດ້ວຍ ການຄຸ້ມຄອງມາດຕະຖານຄຸນນະພາບນ້ຳດື່ມ ແລະ ນ້ຳໃຊ້ ສະບັບເລກທີ 561/ສທ, ລົງວັນທີ 27 ກຸມພາ 2014;

9.4 ຂໍ້ຕົກລົງ ຂອງລັດຖະມົນຕີ ກ່ຽວກັບ ນະໂຍບາຍລາຄານ້ຳປະປາ ຂອງ ສປປ ລາວ ສະບັບເລກທີ 5536/ຄຂປກ, ລົງວັນທີ 26/04/2004;

9.5 ກົດໝາຍ ວ່າດ້ວຍ ນ້ຳປະປາ ສະບັບເລກທີ 04/ສພຊ, ລົງວັນທີ 9 ກໍລະກົດ 2009;

9.6 ບົດແນະນຳ ກ່ຽວກັບ ເປົ້າໝາຍການດຳເນີນງານດ້ານການບໍລິການ ແລະ ລະດັບການບໍລິການ ສະບັບເລກທີ 022/ຍທຂ, ລົງວັນທີ;

9.7 ຮ່າງບົດແນະນຳ ສຳລັບ ການຄຸ້ມຄອງ ແລະ ການປະເມີນຜົນການປະຕິບັດງານ ການບໍລິການ ນ້ຳປະປາ (MaWaSU1 & MaWaSU2);

9.8 ຂໍ້ມູນ ກ່ຽວກັບ ການຄິດໄລ່ຕົວຊີ້ວັດ ໄດ້ຈາກ ລັດວິສາຫະກິດນ້ຳປະປາແຂວງ.